ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

# ບົດລາຍງານປະຈຳປີ 2022

# *Annual Report*



# ບົດຄໍາເຫັນຂອງຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ



ຕະຫຼາດທຶນ ມີຄວາມສໍາຄັນຕໍ່ລະບົບເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ. ຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນນາມອົງການຄຸ້ມຄອງວຽກງານຫຼັກຊັບ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນ ໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງຕິດຕາມກວດກາວຽກງານຫຼັກຊັບ ເພື່ອເຮັດໃຫ້ຕະຫຼາດທຶນຂອງ ສປປ ລາວ ເຕີບໃຫຍ່ຂະຫຍາຍຕົວຢ່າງເຂັ້ມແຂງ ມີປະສິດທິພາບ, ໜ້າເຊື່ອຖື ແລະ ສອດຄ່ອງກັບມາດຕະຖານສາກົນ ເທື່ອລະກ້າວ.

ໃນປີ 2022 ສະພາບການເສດຖະກິດໂດຍລວມຂອງບັນດາປະເທດໃນທົ່ວໂລກ ມີການຜັນແປຢ່າງສະຫຼັບຊັບຊ້ອນ ແລະ ພົບກັບສິ່ງທ້າທາຍຫຼາຍສົມຄວນ ເນື່ອງຈາກໄດ້ຮັບຜົນກະທົບຈາກປັດໃຈຕ່າງໆ ເປັນຕົ້ນ ອັດຕາເງິນເຟີ້ຢູ່ໃນລະດັບສູງ, ເສດຖະກິດຊະລໍຕົວ, ລາຄາພະລັງງານຜັນຜວນ ແລະ ມີທ່າອ່ຽງສູງຂຶ້ນ, ຄວາມຂັດແຍ້ງທາງດ້ານການເມືອງ ຍັງມີຄວາມເຄັ່ງຕຶງ ຄຽງຄູ່ກັບ ການເພີ່ມທະວີການເຊື່ອມໂຍງທາງດ້ານເສດຖະກິດ- ສັງຄົມ ໃນພາກພື້ນ ແລະ ສາກົນ, ການພັດທະນາດ້ານເທັກໂນໂລຊີ ທີ່ທັນສະໄໝຢ່າງກ້າວກະໂດດ, ການເຄື່ອນໄຫວທຸລະກິດໂດຍຄໍານຶງເຖິງສິ່ງແວດລ້ອມ ແລະ ຄວາມຍືນຍົງ. ສະພາບການດັ່ງກ່າວ, ໄດ້ສ້າງທັງກາລະໂອກາດ ແລະ ສິ່ງທ້າທາຍຕໍ່ການພັດທະນາຕະຫຼາດຫຼັກຊັບໃນທົ່ວໂລກ ລວມທັງ ຕະຫຼາດທຶນຂອງ ສປປ ລາວ ກໍ່ເຊັ່ນກັນ.

ສໍາລັບ ສປປ ລາວ ປີ 2022 ໄດ້ສືບຕໍ່ສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ຊຸ້ນຂ້ຽວຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ກ່ຽວກັບ ການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ (2021-2023), ເວົ້າສະເພາະ ຢູ່ໃນຂະແໜງຕະຫຼາດທຶນຂອງພວກເຮົາ ກໍ່ພວມສຸມໃສ່ຜັນຂະຫຍາຍຈັດຕັ້ງປະຕິບັດບັນດາແຜນງານ-ໂຄງການ ພັດທະນາຕະຫຼາດທຶນ 5 ປີ (2021-2025).

ການພັດທະນາຕະຫຼາດທຶນ ໃນປີ 2022 ບົນພື້ນຖານການຊີ້ນໍາ-ນໍາພາຢ່າງໃກ້ສິດຈາກ ຄະນະກໍາມະການຄຸ້ມຄອງຫຼັກຊັບ, ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໂດຍສົມທົບກັບບັນດາຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານຕາມແຜນພັດທະນາຕະຫຼາດທຶນ ໂດຍລັດຖະບານໄດ້ຮັບຮອງ ແລະ ປະກາດໃຊ້ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035; ສໍາເລັດການສ້າງ ແລະ ປັບປຸງນິຕິກໍາໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຈໍານວນ 21 ສະບັບ ພ້ອມທັງ ໄດ້ສໍາເລັດການກໍານົດມາດຕະຖານ ແລະ ເງື່ອນໄຂຂອງເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ ເພື່ອເອື້ອອໍານວຍໃຫ້ແກ່ການລະດົມທຶນ ແລະ ການລົງທຶນ ໃນຕະຫຼາດທຶນພາຍໃນ ແລະ ຕ່າງປະເທດ. ສໍາລັບການບັງຄັບໃຊ້ກົດໝາຍ ແລະ ນິຕິກໍາໃນຂົງເຂດວຽກງານຫຼັກຊັບ ເຫັນວ່າ ມີປະສິດທິພາບ ແລະ ສາມາດສະກັດກັ້ນການກະທໍາຜິດ ໂດຍໄດ້ປະຕິບັດມາດຕະການປັບໃໝ ຕໍ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຈໍານວນ 1 ແຫ່ງ; ດ້ານການຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ ໃນປີ 2022 ມີຍອດສະສົມການລະດົມທຶນ 32.774,57 ຕື້ກີບ (ຮຸ້ນ, ຮຸ້ນກູ້ ແລະ ພັນທະບັດ), ສໍາເລັດການຈັດຝຶກອົບຮົມໄລຍະສັ້ນ ໃນການສ້າງຄວາມເຂັ້ມແຂງທາງດ້ານມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ໃຫ້ແກ່ພະນັກງານຂັ້ນການນໍາ ແລະ ຂັ້ນວິຊາການ ພ້ອມທັງ ໄດ້ສໍາເລັດການ

ຕິດຕາມການທົດລອງການປະເມີນການຈັດຕັ້ງປະຕິບັດຄໍາແນະນໍາວ່າດ້ວຍການຄຸ້ມຄອງບໍລິຫານ (CG Scorecard) ຂອງບໍລິສັດຈົດທະບຽນ 10 ແຫ່ງ. ດ້ານການພັດທະນາຜະລິດຕະພັນຫຼັກຊັບ ໄດ້ສໍາເລັດການຄົ້ນຄວ້າພັນທະບັດສີຂຽວ, ສັງຄົມ ແລະ ຍືນຍົງ ພ້ອມທັງ ສໍາເລັດການເຊັນ ບົດບັນທຶກຄວາມເຂົ້າໃຈຮ່ວມກັບ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ; ດ້ານການສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ ໂດຍສະເພາະການຄຸ້ມຄອງຕະຫຼາດຫຼັກຊັບລາວ ໄດ້ສໍາເລັດການຄົ້ນຄວ້າ ແລະ ຂຶ້ນແຜນການສ້າງກະດານຮອງໃນຕະຫຼາດຫຼັກຊັບລາວ ພ້ອມນີ້ ຕລຊລ ໄດ້ຄົ້ນຄວ້າຄົ້ນຄວ້າສ້າງແຜນທຸລະກິດ ແລະ ແຜນພັດທະນາພື້ນຖານໂຄງລ່າງ ເປັນຕົ້ນແມ່ນ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ພ້ອມທັງຄົ້ນຄວ້າປັບປຸງນິຕິກໍາ ແລະ ກົນໄກການຈົດທະບຽນ ແລະ ການຖອນການຈົດທະບຽນ. ສໍາລັບການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ໄດ້ສໍາເລັດການຮັບຮອງ ແລະ ຕໍ່ອາຍຸສະຖາບັນສື່ກາງດ້ານຫຼັກຊັບ ຈໍານວນ 17 ແຫ່ງ, ຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ 3 ຫຼັກສູດ ແລະ ອອກ-ຕໍ່ອາຍຸໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ 19 ຄົນ ພ້ອມທັງ ໄດ້ສໍາເລັດການຄົ້ນຄວ້າກົນໄກການຄຸ້ມຄອງການເຄື່ອນໄຫວທຸລະກິດປະເມີນມູນຄ່າຊັບສິນ ຢູ່ ສປປ ລາວ; ຄຽງຄູ່ກັນນີ້, ສຄຄຊ ໄດ້ສືບຕໍ່ໃຫ້ຄວາມສໍາຄັນໃນການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ວຽກງານຕະຫຼາດທຶນໃຫ້ແກ່ມວນຊົນ ໂດຍໄດ້ພັດທະນາ ເນື້ອໃນ ແລະ ຮູບແບບ ການຝຶກອົມຮົມ ແລະ ການໂຄສະນາເພື່ອໃຫ້ແທດເໝາະກັບກຸ່ມເປົ້າໝາຍຫຼາຍຍິ່ງຂຶ້ນ ຊຶ່ງໄດ້ສໍາເລັດການຈັດຕັ້ງ 15 ຄັ້ງ, ສໍາເລັດການຊຸກຍູ້ສ້າງຫຼັກສູດໄລຍະສັ້ນ 3 ຫຼັກສູດ, ສ້າງສື່ໂຄສະນາຕ່າງໆ 69 ຫົວຂໍ້ ພ້ອມທັງໄດ້ເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັບ ສະຖາບັນການທະນາຄານ ເພື່ອພັດທະນາການຝຶກອົບຮົມວຽກງານຫຼັກຊັບ. ພ້ອມນີ້, ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານວິຊາການ ສຄຄຊ ໄດ້ເພີ່ມທະວີການຮ່ວມມືໃນຮູບແບບ ສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ໂດຍໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການຮ່ວມມື ລະຫວ່າງລັດຖະບານລາວ ແລະ ລັດຖະບານລຸກຊໍາບວກ (LAO/032) ໂດຍເລັ່ງໃສ່ການກະກຽມຄວາມພ້ອມໃນການນໍາເອົາລັດວິສາຫະກິດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ, ແລະ ພັດທະນາວຽກງານເຜີຍແຜ່ຄວາມຮູ້ວຽກງານຫຼັກຊັບ; ຈັດກອງປະຊຸມສໍາມະນາຮ່ວມກັບ ຄຄຊ ປະເທດຕ່າງໆ ທັງກັບທີ່ ແລະ ອອນລາຍ ຈໍານວນ 8 ຄັ້ງ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ ຂອງພາກພື້ນ ແລະ ສາກົນ ຢ່າງເປັນປົກກະຕິ ເຊິ່ງເຮັດໃຫ້ບຸກລະຄາກອນໃນວຽກງານຕະຫຼາດທຶນສາມາດຖອດຖອນບົດຮຽນເພື່ອນໍາມາປັບປຸງນິຕິກໍາ ແລະ ສ້າງແນວທາງໃນການຄຸ້ມຄອງວຽກງານຫຼັກຊັບ ໃຫ້ສອດຄ່ອງກັບມາດຕະຖານສາກົນເທື່ອລະກ້າວ.

ສໍາລັບທິດທາງແຜນການໃນປີ 2023 ສຄຄຊ ຈະສຸມໃສ່ສ້າງ ແລະ ປັບປຸງນິຕິກໍາລຸ່ມກົດໝາຍໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ເປັນບ່ອນອີງໃນການຄຸ້ມຄອງເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ; ສົມທົບກັບກະຊວງກ່ຽວຂ້ອງ ໃນການຄົ້ນຄວ້າລາຍຊື່ເປົ້າໝາຍບໍລິສັດທີ່ເປັນບູລິມະສິດ ເພື່ອກະກຽມຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ; ຄົ້ນຄວ້າການສະເໜີອອກຈໍາໜ່າຍຫຼັກຊັບໃນປີ 2023 ຢ່າງໜ້ອຍ 02 ກໍລະນີ; ສືບຕໍ່ຄົ້ນຄວ້າກ່ຽວກັບການລະດົມທຶນດ້ວຍການອອກຈໍາໜ່າຍຮຸ້ນກູ້ ຂອງວິສາຫະກິດ ຢູ່ ສປປ ລາວ; ຕິດຕາມ ການວິເຄາະຊ່ອງຫວ່າງການຂ້າມຜ່ານສູ່ການຈັດຕັ້ງປະຕິບັດ IFRS ຂອງ 11 ບໍລິສັດຈົດທະບຽນ; ຊຸກຍູ້ ແລະ ຕິດຕາມ ໃນການເລີ່ມການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນໃນ ຕລຊລ ໃນປີ 2023; ສືບຕໍ່ຊຸກຍູ້ ແລະ ຕິດຕາມການຖອນບໍລິສັດຈົດທະບຽນທີ່ຖືກເງື່ອນໄຂ ອອກຈາກ ຕລຊລ; ຄົ້ນຄວ້າ ແລະ ຊຸກຍູ້ ສ້າງເງື່ອນໄຂໃຫ້ສາມາດພັດທະນາ ແລະ ເປີດການຊື້ ຂາຍຮຸ້ນ ຜ່ານລະບົບກະດານຮອງ ພ້ອມທັງ ຄົ້ນຄວ້າສ້າງຮຸ້ນກູ້ສີຂຽວ, ຄົ້ນຄວ້າສ້າງ ກອງທຶນເພື່ອລົງທຶນໃນບໍລິສັດ (PE), ກອງທຶນທຸລະກິດຮ່ວມລົງທຶນ (VC) ແລະ ກອງທຶນພື້ນຖານໂຄງລ່າງ; ຊຸກຍູ້ບໍລິສັດຫຼັກຊັບ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສຶກສາຄວາມເປັນໄປໄດ້ໃນການພັດທະນາລະບົບການຊື້-ຂາຍຫຼັກຊັບ ຜ່ານມືຖື (Mobile Trading App) ພ້ອມທັງ ຊຸກຍູ້ການກໍ່ສ້າງຊ່ຽວຊານສະເພາະດ້ານ ເພື່ອຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນ ຂອງສະຖາບັນສື່ກາງດ້ານຫຼັກຊັບ; ສືບຕໍ່ຈັດຕັ້ງວຽກງານໂຄສະນາເຜີຍແຜ່ດ້ວຍຫຼາຍຮູບການທີ່ເໝາະສົມ; ສືບຕໍ່ຮ່ວມມື ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງ

ການຈັດຕັ້ງສາກົນ ຢ່າງເປັນປົກກະຕິ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ ໂດຍສະເພາະ ກະກຽມຮ່ວມລົງນາມໃນ ບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ຄຄຊ ສປປ ລາວ ແລະ ຄຄຊ ກໍາປູເຈຍ ກ່ຽວກັບການຮ່ວມມືວຽກງານຫຼັກຊັບ ແລະ ກະກຽມສະໝັກເຂົ້າເປັນສະມາຊິກສົມບູນຂອງອົງການ IOSCO ເພື່ອຍົກລະດັບວຽກງານຫຼັກຊັບຂອງ ສປປ ລາວ ໃນເວທີສາກົນເທື່ອລະກ້າວ.

# ສະຖິຕິສຳຄັນໃນປີ 2022




ປີ 2022 ໄດ້ສ້າງ ແລະ ປັບປຸງນິຕິກຳ 21 ສະບັບ ປະກອບມີ: ຂໍ້ຕົກລົງ 16 ສະບັບ, ແຈ້ງການ 2 ສະບັບ, ຄຳແນະນຳ 1 ສະບັບ ແລະ ຄູ່ມື 2 ສະບັບ (ປະຈຸບັນ ສຄຊ ມີນິຕິກຳທັງໝົດ 98 ສະບັບ)



- ໃນປີ 2022 ນັກວິຊາຊີບທັງໝົດ **56 ຄົນ** ປະກອບມີ: ນັກວິຊາຊີບທຸລະກິດຫຼັກຊັບ 26 ຄົນ, ນັກວິຊາຊີບກວດສອບ 10 ຄົນ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 20 ຄົນ).



ບັນຊີຜູ້ລົງທຶນທັງໝົດໃນປີ 2022 **ເພີ່ມຂຶ້ນ 336 ບັນຊີ** (ທັງໝົດມີ 17.124 **ບັນຊີ** ຄື: ພາຍໃນ 13.656 ບັນຊີ ຕ່າງປະເທດ 3.468 ບັນຊີ).



- ມູນຄ່າການຊື້-ຂາຍ ໃນປີ 2022 ແມ່ນ **39,97 ຕື້ກີບ** (ທັງໝົດນັບແຕ່ເປີດຕະຫຼາດມີ **1.759,08 ຕື້ກີບ**);
- ມູນຄ່າຕະຫຼາດໃນທ້າຍປີ 2022 ແມ່ນ **7.552,08 ຕື້ກີບ**;
- ດັດຊະນີຫຼັກຊັບທ້າຍປີ 2022 ປິດຢູ່ທີ່ **717,28 ຈຸດ.**



- ປີ 2022 ມີບໍລິສັດຈົດທະບຽນ ທັງໝົດມີ **11 ແຫ່ງ**;
- ໄດ້ຮັບຮູ້ການອອກຈຳໜ່າຍຮຸ້ນກູ້ ຢູ່ປະເທດໄທ 2 ຄັ້ງ ມູນຄ່າ **4.258 ຕື້ກີບ**;
- ຍອດສະສົມການລະດົມທຶນຜ່ານການອອກຫຼັກຊັບ (ຮຸ້ນ ແລະ ຮຸ້ນກູ້) ທັງພາຍໃນ ແລະ ຕ່າງປະເທດ ຮອດປັດຈຸບັນ: **26.115 ຕື້ກີບ**;
- ການອອກຈຳໜ່າຍພັນທະບັດລັດຖະບານ ຜ່ານ ຕລຊລ **1.393,32 ຕື້ກີບ** ແລະ **14,20 ລ້ານໂດລາສະຫະລັດ;**
- ຍອດສະສົມການລະດົມທຶນ ຜ່ານການອອກຈຳໜ່າຍພັນທະບັດລັດຖະບານຜ່ານ ຕລຊລ ຮອດປັດຈຸບັນ **5.387 ຕື້ກີບ** ແລະ **73,29 ລ້ານໂດລາສະຫະລັດ.**



- ບໍລິສັດຫຼັກຊັບ **4 ແຫ່ງ**
- ບໍລິສັດກວດສອບ **3 ແຫ່ງ**
- ບໍລິສັດປະເມີນມູນຄ່າຊັບສິນ **8 ແຫ່ງ**
- ທະນາຄານດູແລຊັບສິນ **3 ແຫ່ງ**
- ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື **1 ແຫ່ງ**
- ແລະ ສະຖາບັນສື່ກາງອື່ນ ອີກ **10 ແຫ່ງ.**




- ປະຕິບັດມາດຕະການປັບໄໝ **1 ກໍລະນີ.**

# ສາລະບານ

I. ສະພາບຕະຫຼາດທຶນ ໃນປີ 2022 ____ 1

1. ສະພາບຕະຫຼາດທຶນຂອງຕ່າງປະເທດ ____ 1

2. ສະພາບຕະຫຼາດທຶນຂອງ ສປປ ລາວ ____ 1

II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2022 ____ 2

1. ອົງການຄຸ້ມຄອງວຽກງານຫຼັກຊັບ ____ 2

1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ____ 2

1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ____ 3

2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2022 ____ 5

2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 5

2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ____ 5

2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 6

2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ____ 6

2.3 ການຄຸ້ມຄອງຕະຫຼາດຫຼັກຊັບລາວ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ____ 8

2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ____ 9

2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ____ 11

2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ ____ 11

2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ____ 12

2.8 ການຮ່ວມມືສາກົນ ____ 15

III. ທິດທາງແຜນການ ປີ 2023 ______ 18

1. ຄາດຄະເນສະພາບຕະຫຼາດທຶນຂອງ ຕ່າງປະເທດ ______ 18

2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ ______ 18

3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2022 ______ 18

3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ ______ 18

3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນ ໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ______ 18

3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ______ 19

3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ______ 19

3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ______ 20

3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ ______ 20

3.7 ການຮ່ວມມືສາກົນ ______ 21

# I. ສະພາບຕະຫຼາດທຶນ ໃນປີ 2022

## 1. ສະພາບຕະຫຼາດທຶນຂອງຕ່າງປະເທດ

ຕະຫຼາດທຶນຕ່າງປະເທດ ໂດຍລວມແມ່ນມີການປັບຕົວຫຼຸດລົງຈາກປີທີ່ຜ່ານມາ ເນື່ອງມາຈາກສະພາບຂໍ້ຂັດແຍ່ງທາງດ້ານການເມືອງ ທີ່ມີຄວາມເຄັ່ງຕຶງ ຊຶ່ງໄປສູ່ຜົນກະທົບຕໍ່ກັບເສດຖະກິດໂລກ ລວມທັງ ພາວະເງິນເຟີ້ຂອງຫຼາຍປະເທດ, ການປັບຂຶ້ນອັດຕາດອກເບ້ຍຂອງທະນາຄານກາງ ສ.ອາເມລິກາ (FED) ກໍ່ໄດ້ກາຍເປັນປັດໄຈດ້ານລົບທີ່ກະທົບຕະຫຼາດທຶນທົ່ວໂລກ ເປັນຕົ້ນແມ່ນ ເສດຖະກິດຂອງກຸ່ມປະເທດເອີຣົບ ແລະ ສປ.ຈີນ ເນື່ອງຈາກໄດ້ດຳເນີນມາດຕະການປິດປະເທດໃນຊ່ວງກາງປີ 2022 ຍ້ອນການແຜ່ລະບາດຂອງພະຍາດອັກເສບປອດ (COVID-19) ເຊິ່ງໄດ້ສ້າງຜົນກະທົບຕໍ່ກັບທຸລະກິດຂອງປະເທດຕ່າງໆ ທີ່ດຳເນີນທຸລະກິດຮ່ວມກັບ ສປ.ຈີນ ເປັນວົງກວ້າງ.

## 2. ສະພາບຕະຫຼາດທຶນຂອງ ສປປ ລາວ

ສະພາບໂດຍລວມຂອງຕະຫຼາດທຶນ ສປປ ລາວ ໃນປີນີ້ ແມ່ນມີການປັບຕົວເພີ່ມຂຶ້ນເລັກໜ້ອຍ ເມື່ອທຽບໃສ່ປີຜ່ານມາ ເນື່ອງຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນຂອງບໍລິສັດໃນຕະຫຼາດຫຼັກຊັບລາວ ແລະ ມາດຕະການຜ່ອນຜັນຈາກການແຜ່ລະບາດຂອງພະຍາດອັກເສບປອດ (COVID-19) ທີ່ໄດ້ຜ່ອນຄາຍລົງ. ແຕ່ຜົນກະທົບທາງເສດຖະກິດທີ່ແກ່ຍາວ ເຮັດໃຫ້ເສດຖະກິດໂດຍລວມຂອງ ສປປ ລາວ ຍັງບໍ່ທັນຟື້ນຕົວໄດ້ເທົ່າທີ່ຄວນ ເປັນຕົ້ນ ບັນຫາອັດຕາເງິນເຟີ້, ອັດຕາແລກປ່ຽນເງິນຕາຕ່າງປະເທດ, ບັນຫາລາຄານ້ຳມັນ, ຄ່າຄອງຊີບທີ່ເພີ່ມຂຶ້ນ ລວມທັງ ສາເຫດທີ່ບັນດາບໍລິສັດຈົດທະບຽນຫຼາຍແຫ່ງ ບໍ່ສາມາດຈ່າຍເງິນປັນຜົນໄດ້ສືບເນື່ອງຈາກປີຜ່ານມາ ສິ່ງເຫຼົ່ານີ້ໄດ້ກາຍເປັນປັດໄຈກະທົບເຮັດໃຫ້ບໍ່ສາມາດດຶງດູດ ແລະ ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ນັກລົງທຶນ. ນອກຈາກນີ້, ກະແສຕອບຮັບຈາກການຂາຍພັນທະບັດທະນາຄານແຫ່ງ ສປປ ລາວ ເຊິ່ງໄດ້ເລີ່ມຂາຍຕັ້ງແຕ່ເດືອນ ມິຖຸນາ 2022 ທີ່ຜ່ານມາ ກໍ່ອາດເປັນປັດໄຈໜຶ່ງ ທີ່ຜູ້ລົງທຶນປ່ຽນທິດທາງການລົງທຶນໄປໃສ່ ພັນທະບັດດັ່ງກ່າວທີ່ມີຜົນຕອບແທນສູງ.

ຄຽງຄູ່ກັນນີ້, ເພື່ອເປັນການພັດທະນາຕະຫຼາດທຶນ ກໍ່ຄື ເສດຖະກິດຂອງ ສປປ ລາວ, ສຄຄຊ ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງ ແລະ ປັບປຸງກົນໄກຂອງຕະຫຼາດທຶນ ເປັນຕົ້ນແມ່ນ ຊຸກຍູ້ພັນທະບັດລັດຖະບານທີ່ອອກຈຳໜ່າຍໃຫ້ແກ່ບັນດາວິສາຫະກິດໂດຍກົງ ໃຫ້ເລີ່ມທະຍອຍນຳມາອອກຜ່ານ ທະນາຄານແຫ່ງ ສປປ ລາວ ແລະ ນຳມາຂຶ້ນທະບຽນຢູ່ຕະຫຼາດຫຼັກຊັບລາວ ເຮັດໃຫ້ການອອກຈຳໜ່າຍພັນທະບັດລັດຖະບານຜ່ານລະບົບຕະຫຼາດທຶນ ນັບແຕ່ປີ 2018 ເປັນຕົ້ນມາ ມີຄວາມຄ່ອງຕົວ. ພ້ອມນີ້, ສຄຄຊ ຍັງໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າສ້າງຊ່ອງທາງເອື້ອອຳນວຍການຊື້-ຂາຍ ພັນທະບັດລັດຖະບານຜ່ານຕະຫຼາດທຶນ ໃຫ້ຫຼາກຫຼາຍຍິ່ງຂຶ້ນ.

## II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2022

### 1.ອົງການຄຸ້ມຄອງວຽກງານຫຼັກຊັບ

### 1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)

ຄຄຊ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ມີປະສິດທິພາບ ໂປ່ງໃສ ແລະ ຍຸຕິທຳ. ການເຄື່ອນໄຫວໃນໄລຍະໜຶ່ງປີຜ່ານມາ ຄຄຊ ໄດ້ກຳນົດແນວທາງໃນການຄຸ້ມຄອງ, ພິຈາລະນາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຢ່າງໃກ້ຊິດ ໂດຍຜ່ານການພິຈາລະນາທາງເອກະສານ ແລະ ຜ່ານການຈັດກອງປະຊຸມຄົບຄະນະຂອງຄະນະກຳມະການຄຸ້ມຄອງຫຼັກຊັບ 02 ຄັ້ງ ເພື່ອພິຈາລະນາບາງບັນຫາທີ່ພົ້ນເດັ່ນ ແລະ ກຳນົດທິດທາງການຈັດຕັ້ງປະຕິບັດວຽກງານຈຸດສຸມໃນແຕ່ລະໄລຍະ. ພ້ອມນີ້, ໃນປີ 2022 ໄດ້ປັບປຸງຄະນະກຳມະການ ຄຄຊ ຈຳນວນ 03 ຄັ້ງ ເນື່ອງຈາກການປ່ຽນແປງດ້ານການຈັດຕັ້ງຂອງພາກສ່ວນກ່ຽວຂ້ອງ. ປັດຈຸບັນໂຄງປະກອບບຸກຄະລາກອນຂອງ ຄຄຊ ປະກອບມີ 11 ທ່ານ (ຕາມຮູບພາບ 1)

**ຮູບພາບ 1: ໂຄງປະກອບບຸກຄະລາກອນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ**



## 1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ສຄຄຊ ປະຕິບັດພາລະບົດບາດໃນການເປັນກົງຈັກຊ່ວຍວຽກໃຫ້ແກ່ຄະນະ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບໃນ ສປປ ລາວ ຢ່າງລວມສູນ ເຊິ່ງໃນໄລຍະໜຶ່ງປີຜ່ານມາ ສຄຄຊ ໄດ້ເອົາໃຈໃສ່ປະຕິບັດວຽກງານຄຸ້ມຄອງຫຼັກຊັບດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຫຼາຍດ້ານ. ຄຽງຄູ່ກັນນີ້, ຄະນະ ສຄຄຊ ກໍ່ໄດ້ຮັບການປັບປຸງເພື່ອນຳພາຊີ້ນຳໃຫ້ມີຄວາມສອດຄ່ອງຕາມເງື່ອນໄຂໃນໄລຍະໃໝ່ ແລະ ບັນຈຸຈັດວາງພະນັກງານລັດຖະກອນໃໝ່ 1 ທ່ານ ແລະ ພະນັກງານ 95% ຈຳນວນ 4 ທ່ານ ຕາມວິຊາສະເພາະຢ່າງເໝາະສົມ. ຮອດປັດຈຸບັນ, ສຄຄຊ ມີພະນັກງານທັງໝົດ 48 ທ່ານ (ຍິງ 24 ທ່ານ), ໃນນີ້ ປະກອບດ້ວຍຄະນະ ສຄຄຊ 3 ທ່ານ (ຍິງ 2 ທ່ານ), ຄະນະພະແນກ 14 ທ່ານ (ຍິງ 5 ທ່ານ) ແລະ ວິຊາການ 31 ທ່ານ (ຍິງ 17 ທ່ານ).

**ຮູບພາບ 2: ໂຄງປະກອບບຸກຄະລາກອນ ຂອງຄະນະ ສຄຄຊ**



## ຮູບພາບ 3: ໂຄງປະກອບບຸກຄະລາກອນ ຂອງ ສຄຄຊ




## ຮູບພາບ 4: ພະນັກງານ ຂອງ ສຄຄຊ



## 2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2022

ໃນປີ 2022 ສຄຄຊ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານວິຊາສະເພາະຂອງຕົນຢ່າງຕັ້ງໜ້າ ໂດຍປະຕິບັດຕາມແຜນງານ, ໂຄງການ, ໜ້າວຽກທີ່ກຳນົດໄວ້ ພ້ອມທັງ ມີການຕິດຕາມ ແລະ ຖອດຖອນບົດຮຽນຕໍ່ການເຄື່ອນໄຫວວຽກງານຢ່າງໃກ້ຊິດ ເຮັດໃຫ້ສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ ຊຶ່ງສາມາດສັງລວມລາຍລະອຽດໄດ້ດັ່ງນີ້:

### 2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

### 2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ

ບົນພື້ນຖານການສົມທົບກັບພາກສ່ວນກ່ຽວຂ້ອງ ສຄຄຊ ໄດ້ສຳເລັດການປັບປຸງ ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ຊຶ່ງ ທ່ານ ນາຍົກລັດຖະມົນຕີ ໄດ້ອອກ ດຳລັດວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ຍຸດທະສາດດັ່ງກ່າວ ເປັນທີ່ຮຽບຮ້ອຍແລ້ວ. ນອກຈາກນັ້ນ, ສຄຄຊ ຍັງໄດ້ສຳເລັດການຄົ້ນຄວ້າ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ທັງໝົດ ຈຳນວນ 21 ສະບັບ (ສ້າງໃໝ່ 10 ສະບັບ ແລະ ປັບປຸງ 11 ສະບັບ) ທັງໝົດນີ້ ຕາມແຜນການ 4 ສະບັບ ແລະ ນອກແຜນການ 17 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບໃນແຕ່ລະໄລຍະ. ອັນທີ່ພົ້ນເດັ່ນ ມີດັ່ງລຸ່ມນີ້:

**ຕາຕະລາງທີ 1: ສັງລວມລາຍຊື່ນິຕິກຳ ທີ່ສຳເລັດໃນປີ 2022**

| ລຳດັບ | ລາຍຊື່ນິຕິກຳ ທີ່ສຳເລັດ ໃນປີ 2022 |
|---|---|
| 1 | ຂໍ້ຕົກລົງວ່າດ້ວຍ ກອງທຶນສ່ວນບຸກຄົນ (ໃໝ່) |
| 2 | ຂໍ້ຕົກລົງວ່າດ້ວຍ ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ (ປັບປຸງ) |
| 3 | ຄຳແນະນຳວ່າດ້ວຍ ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ (ປັບປຸງ) |
| 4 | ແຈ້ງການເລື່ອງ ການລະດົມທຶນໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ (ປັບປຸງ) |
| 5 | ຂໍ້ຕົກລົງວ່າດ້ວຍ ການກຳນົດລາຄາຮຸ້ນທີ່ຈະອອກຈຳໜ່າຍຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ (ປັບປຸງ) |
| 6 | ຂໍ້ຕົກລົງວ່າດ້ວຍ ຄັງເງິນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ປັບປຸງ); |
| 7 | ຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ເປີດເຜີຍຂໍ້ມູນຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ປັບປຸງ) |
| 8 | ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນ (ປັບປຸງ) |
| 9 | ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຕະຫຼາດຫຼັກຊັບ (ປັບປຸງ) |
| 10 | ຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ (ປັບປຸງ) |
| 11 | ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ປັບປຸງ) |
| 12 | ຂໍ້ຕົກລົງວ່າດ້ວຍ ການຊື້ຮຸ້ນຄືນ ແລະ ການຂາຍຮຸ້ນທີ່ຊື້ຄືນຂອງບໍລິສັດຈົດທະບຽນ (ໃໝ່) |
| 13 | ຂໍ້ຕົກລົງວ່າດ້ວຍ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ (ໃໝ່) |
| 14 | ຂໍ້ຕົກລົງວ່າດ້ວຍ ຄ່າບໍລິການກ່ຽວກັບການປ່ຽນແປງທີ່ຕ້ອງໄດ້ຂໍອະນຸຍາດຂອງສະຖາບັນສື່ກາງດ້ານຫຼັກຊັບ (ໃໝ່) |

| | |
|---|---|
| 15 | ຄູ່ມືກ່ຽວກັບ ການລົງກວດກາກັບທີ່ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ໃໝ່) |
| 16 | ຄູ່ມືກ່ຽວກັບ ການກວດສອບຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງການອອກໃບອະນຸຍາດດຳເນີນທຸລະກິດຂອງ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ເຄື່ອນໄຫວທຸລະກິດຢູ່ ສປປ ລາວ (ໃໝ່) |
| 17 | ຂໍ້ຕົກລົງວ່າດ້ວຍ ການຍົກເວັ້ນຄ່າບໍລິການໃນການຮັບຮອງເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ (ໃໝ່) |
| 18 | ຂໍ້ຕົກລົງວ່າດ້ວຍ ການຮັບຮອງບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ (ໃໝ່) |
| 19 | ຂໍ້ຕົກລົງວ່າດ້ວຍ ການໄດ້ມາ ແລະ ການຊື້ຂາດຊັບສິນຂອງບໍລິສັດຈົດທະບຽນ (ໃໝ່) |
| 20 | ແຈ້ງການເລື່ອງ ການຮັບຮອງເປັນທະນາຄານຕົວແທນເພື່ອການຊໍາລະໃນວຽກງານຫຼັກຊັບ (ປັບປຸງ) |
| 21 | ຂໍ້ຕົກລົງວ່າດ້ວຍ ມາດຕະຖານ ແລະ ເງື່ອນໄຂຂອງເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ (ໃໝ່) |

ຮອດປັດຈຸບັນ, ນິຕິກຳໃນຂົງເຂດວຽກງານຫຼັກຊັບ ປະກອບມີ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ນິຕິກຳໃຕ້ກົດໝາຍສະບັບດັ່ງກ່າວ ທັງໝົດຈຳນວນ 98 ສະບັບ (ເພີ່ມຂຶ້ນຈາກປີ 2021 ຈຳນວນ 10 ສະບັບ).

### 2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

ເພື່ອສືບຕໍ່ດຶງດູດ ແລະ ຊຸກຍູ້ການເຂົ້າຮ່ວມ ແລະ ປະກອບສ່ວນໃນວຽກງານຕະຫລາດທຶນ, ສຄຄຊ ໄດ້ສົມທົບກັບກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ປຶກສາຫາລື ແລະ ຄົ້ນຄວ້າກ່ຽວກັບ ບັນຫາ, ວິທີແກ້ໄຂ ແລະ ນະໂຍບາຍອາກອນ ແລະ ບໍ່ແມ່ນອາກອນ ທີ່ຕິດພັນກັບການພັດທະນາວຽກງານຕະຫຼາດທຶນ ໃນແຕ່ລະໄລຍະ ໂດຍສະເພາະ ໄດ້ທົບທວນຜົນການຈັດຕັ້ງປະຕິບັດນະໂຍບາຍທີ່ກ່ຽວຂ້ອງ ໃນໄລຍະຜ່ານມາ ແລະ ທິດທາງການພັດທະນາຕະຫຼາດທຶນໃນຕໍ່ໜ້າ.

## 2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

- ❖ **ການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ**

ໃນປີ 2022 ສຄຄຊ ໄດ້ສຳເລັດການຄົ້ນຄວ້າອະນຸມັດໃຫ້ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດ ໄຊຍະບູລີ ພາວເວີ ຈຳກັດ ອອກຈຳໜ່າຍຮຸ້ນກູ້ ຢູ່ປະເທດໄທ ໃນມູນຄ່າບໍ່ເກີນ 1.085,5 ລ້ານບາດ ແລະ ມູນຄ່າບໍ່ເກີນ 10.000 ລ້ານບາດ ຕາມລຳດັບ ເຊິ່ງສຳເລັດລະດົມທຶນໄດ້ຕົວຈິງ 972.400.000 ບາດ ແລະ 8.395.000.000 ບາດ ຕາມລຳດັບ ຫຼື ທຽບເທົ່າ 4.258 ຕື້ກີບ ເພີ່ມຂຶ້ນເກືອບ 03 ເທົ່າຕົວ ເມື່ອທຽບໃສ່ປີ 2021.

**ຕາຕະລາງທີ 2: ສັງລວມການລະດົມທຶນຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2022.**

ຫົວໜ່ວຍ: ຕື້ກີບ

| ປີ | 2010 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 | 2021 | 2022 | ລວມ |
|---|---|---|---|---|---|---|---|---|---|---|---|---|---|
| ລະດົມທຶນພາຍໃນ | 1.237 | 1.611 | 40 | 240 | 2.832 | - | 458 | 69 | 332 | - | - | - | 6.819 |
| ລະດົມທຶນຢູ່ຕ່າງປະເທດ | - | - | - | 1.625 | - | 2.558 | 1.500 | 5.349 | 1.620 | 494 | 1.892 | 4.258 | 19.296 |
| **ລວມ** | **1.237** | **1.611** | **40** | **1.865** | **2.832** | **2.558** | **1.958** | **5.418** | **1.952** | **494** | **1.892** | **4.258** | **26.115** |

ໂດຍລວມແລ້ວ, ນັບແຕ່ປີ 2010-2022 ຍອດສະສົມການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ລວມທັງໝົດ 26.115 ຕື້ກີບ (ຍັງບໍ່ລວມພັນທະບັດ) ກວມເອົາ 12,30% ຂອງ GDP ເຊິ່ງທຶນດັ່ງກ່າວ ໄດ້ນຳໃຊ້ເຂົ້າໃນການຂະຫຍາຍທຸລະກິດ ເປັນຕົ້ນແມ່ນ ສ້າງເຂື່ອນໄຟຟ້າ, ສ້າງປ້ຳນ້ຳມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນ້ຳມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ ແລະ ການທະນາຄານ, ນຳໃຊ້ເປັນທຶນໝູນວຽນ ໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ. ຮອດທ້າຍປີ 2022, ບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ມີທັງໝົດ 11 ແຫ່ງ (ຕົວເລກຄົງທີ່ຈາກປີ ທີ່ຜ່ານມາ) (ລາຍຊື່ບັນດາບໍລິສັດຈົດທະບຽນ ຢູ່ໃນເອກະສານຊ້ອນທ້າຍ 1).

ພ້ອມດຽວກັນນັ້ນ, ສຄຄຊ ໄດ້ຕິດຕາມລາຍງານການຈັດຕັ້ງປະຕິບັດການຊື້-ຂາຍ ພັນທະບັດລັດຖະບານ ຢ່າງເປັນປົກກະຕິ ເຊິ່ງໃນປີ 2022 ສຳເລັດການຂາຍພັນທະບັດມູນຄ່າ 1.393,55 ຕື້ກີບ (1/2022 – 12/2022) ແລະ 14,20 ລ້ານໂດລາສະຫະລັດ (1/2022-12/2022), ມູນຄ່າທັງໝົດນັບແຕ່ເລີ່ມຂາຍຈົນຮອດທ້າຍປີ 2022 ແມ່ນ 5.387 ຕື້ກີບ (12/2018 – 12/2022) ແລະ 73,29 ລ້ານໂດລາສະຫະລັດ (09/2020 – 12/2022) ເຊິ່ງທຶນທີ່ລະດົມໄດ້ດັ່ງກ່າວ ໄດ້ປະກອບສ່ວນໃນການ ບໍລິຫານທົ່ວໄປຂອງລັດຖະບານ, ດັດສົມງົບປະມານ ແລະ ລົງທຶນໃນ ໂຄງການຕ່າງໆ ຂອງລັດຖະບານ.

**ຕາຕະລາງທີ 3: ສັງລວມສະພາບການອອກຈຳໜ່າຍພັນທະບັດລັດຖະບານ (ຮອດທ້າຍປີ 2022)**

| ລ/ດ | ລາຍການປີທີ່ອອກ | ຈຳນວນອອກ | ສະກຸນເງິນ | ຈຳນວນທີ່ຂາຍໄດ້ | ຄິດເປັນ % |
|---|---|---|---|---|---|
| 1 | 2018 | 1.000.000.000.000 | ກີບ | 1.000.000.000.000 | 100,00 |
| 2 | 2019 | 1.700.000.000.000 | ກີບ | 1.700.000.000.000 | 100,00 |
| 3 | 2020-2021 | 1.500.000.000.000 | ກີບ | 987.541.800.000 | 65,84 |
| 4 | 2020-2021 | 1.700.000.000.000 | ກີບ | 1.699.458.200.000 | 99,97 |
| 5 | 2020 | 50.000.000 | ໂດລາ | 50.000.000 | 100,00 |
| 6 | 2021 | 50.000.000 | ໂດລາ | 23.294.500 | 46,59 |
| **ລວມທັງໝົດ** | | **5.900.000.000.000** | **ກີບ** | **5.387.000.000.000** | **91,31** |
| **ລວມທັງໝົດ** | | **100.000.000** | **ໂດລາ** | **73.294.500** | **73,29** |

❖ **ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ**

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ໃນແຕ່ລະໄລຍະຢ່າງໃກ້ຊິດ ໂດຍສະເພາະ ແມ່ນຕິດຕາມການລາຍງານ ແລະ ການເປີດເຜີຍຂໍ້ມູນ ບົດລາຍງານການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ, ການຈ່າຍເງິນປັນຜົນ, ການນຳໃຊ້ທຶນທີ່ລະດົມໄດ້ ແລະ ອື່ນໆ ຢ່າງເປັນປົກກະຕິ. ພ້ອມນີ້, ໄດ້ສຳເລັດການຄົ້ນຄວ້າກ່ຽວກັບນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນ.

ພ້ອມດຽວກັນນີ້, ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ, ສຄຄຊ ໄດ້ສຳເລັດການຈັດຝຶກອົບຮົມໄລຍະສັ້ນ ໃນການສ້າງຄວາມເຂັ້ມແຂງທາງດ້ານມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ໃຫ້ແກ່ພະນັກງານ

ການນໍາ ແລະ ຝຶກອົບຮົມສໍາລັບພະນັກງານ ລວມຈໍານວນ 2 ຄັ້ງ ພ້ອມທັງ ໄດ້ອອກແຈ້ງການເຖິງ ບໍລິສັດຈົດທະບຽນໃນ ຕລຊລ ກ່ຽວກັບການລາຍງານຄວາມຄືບໜ້າໃນການສ້າງ ແລະ ປະຕິບັດແຜນການລະອຽດ ກ່ຽວກັບການຂ້າມຜ່ານໄປສູ່ການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ຂອງບໍລິສັດຈົດທະບຽນໃນ ຕລຊລ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາແຜນວຽກການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ສໍາລັບຂະແໜງຫຼັກຊັບ (IFRS Roadmap) ທີ່ ທ່ານປະທານ ຄຄຊ ໄດ້ຮັບຮອງ. ສ່ວນການພັດທະນາວຽກງານການຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນ ສຄຄຊ ໄດ້ສໍາເລັດການຕິດຕາມການທົດລອງການປະເມີນການຈັດຕັ້ງປະຕິບັດຄໍາແນະນໍາວ່າດ້ວຍການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນ 10 ແຫ່ງ ແລະ ອອກແຈ້ງການກ່ຽວກັບການປະເມີນການຄຸ້ມຄອງບໍລິຫານ CG Scorecard ໃຫ້ແກ່ ຕລຊລ ເພື່ອເປັນບ່ອນອີງໃນການປະຕິບັດວຽກງານດັ່ງກ່າວ.

## 2.3 ການຄຸ້ມຄອງຕະຫຼາດຫຼັກຊັບລາວ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

### ❖ ການຄຸ້ມຄອງຕະຫຼາດຫຼັກຊັບ

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງ ຕລຊລ ຢ່າງໃກ້ຊິດ ດ້ວຍການກວດກາຕາມເອກະສານ ປະຈໍາເດືອນ, ໄຕມາດ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ ປະຈໍາປີ 2022 ຈໍານວນ 1 ຄັ້ງ ໂດຍລົງເລິກ ກວດກາລະບົບການຊື້-ຂາຍ, ການເກັບຮັກສາຂໍ້ມູນ, ເອກະສານລາຍງານການເງິນ ແລະ ການເຄື່ອນໄຫວວຽກງານຂອງ ຕລຊລ. ຜ່ານການກວດກາຕົວຈິງ ເຫັນວ່າການເຄື່ອນໄຫວຂອງ ຕລຊລ ປົກກະຕິ ຊຶ່ງຜົນການກວດກາປີ 2022 ໄດ້ສະແດງໃຫ້ເຫັນເຖິງຄວາມພະຍາຍາມຂອງ ຕລຊລ ໃນການສືບຕໍ່ພັດທະນາທຸລະກິດຂອງຕົນ ໂດຍການສືບຕໍ່ຄົ້ນຄວ້າສ້າງແຜນທຸລະກິດ ແລະ ແຜນພັດທະນາພື້ນຖານໂຄງລ່າງ ໂດຍສະເພາະແມ່ນ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ກໍາລັງກະກຽມເຂົ້າກອງປະຊຸມຜູ້ຖືຮຸ້ນ ຂອງ ຕລຊລ ເພື່ອໃຫ້ແຜນພັດທະນາມີຄວາມເໝາະສົມໃນແຕ່ລະໄລຍະ. ເຖິງຢ່າງໃດກໍ່ຕາມ ຕລຊລ ຍັງບໍ່ສາມາດນໍາບໍລິສັດເຂົ້າຈົດທະບຽນໄດ້ຕາມຄາດໝາຍທີ່ກໍານົດໄວ້.

ນອກນີ້, ໃນປີ 2022 ສຄຄຊ ໄດ້ປັບປຸງ ຂໍ້ຕົກລົງວ່າດ້ວຍການ ຄຸ້ມຄອງຕະຫຼາດຫຼັກຊັບ ແລະ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ເພື່ອໃຫ້ ລະບຽບຂອງ ສຄຄຊ ມີຄວາມຮັດກຸມ ແລະ ແທດເໝາະກັບສະພາບການຕົວຈິງ ໃນວຽກງານການຄຸ້ມຄອງຕະຫຼາດຫຼັກຊັບ.

### ❖ ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ມູນຄ່າຕະຫຼາດຫຼັກຊັບລາວ ໃນວັນທີ 28/12/2022 ມີມູນຄ່າ 7.552,08 ຕື້ກີບ; ດັດຊະນີ ຕລຊລ ໃນທ້າຍປີ 2022 ປິດຢູ່ທີ່ 717,28 ຈຸດ ເພີ່ມຂຶ້ນ 20,03% ທຽບໃສ່ດັດຊະນີຂອງ ທ້າຍປີ 2021 ໂດຍມີມູນຄ່າການຊື້-ຂາຍທັງໝົດ 39,97 ຕື້ກີບ ຫຼຸດລົງ -22,48% ເມື່ອທຽບໃສ່ປີ 2021 ໃນນັ້ນ, ເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 46,97%. ສັງເກດເຫັນວ່າ ດັດຊະນີຕະຫຼາດຫຼັກຊັບ ປັບຕົວເພີ່ມຂຶ້ນພໍສົມຄວນ ເມື່ອທຽບກັບ ສອງສາມປີທີ່ຜ່ານມາ. ສາເຫດຫຼັກມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ LALCO ທີ່ປັບຕົວເພີ່ມຂຶ້ນສູງເປັນປະຫວັດການພາຍຫຼັງ ບໍລິສັດໄດ້ແຈ້ງວ່າ ບໍລິສັດມີເງິນສະສົມ 570 ຕື້ກີບ ທີ່ຈະນໍາມາປັນຜົນ ໂດຍຈະແບ່ງອອກເປັນຫຼາຍງວດ, ແຕ່ໃນພາກປະຕິບັດຕົວຈິງ ແມ່ນຍັງບໍ່ມີການຈ່າຍເງິນປັນຜົນດັ່ງກ່າວ. ສາເຫດຂອງຂ່າວດັ່ງກ່າວເລີ່ມສົ່ງຜົນໃຫ້ມີການເກັບ ຊື້ຮຸ້ນຂອງນັກລົງທຶນຕ່າງປະເທດເພີ່ມຂຶ້ນຈາກຜູ້ລົງທຶນລາຍຍ່ອຍພາຍໃນປະເທດ ໃນລະດັບລາຄາທີ່ສູງ ເຊິ່ງເຮັດໃຫ້ລາຄາຮຸ້ນປັບຕົວເພີ່ມຂຶ້ນໄວ ແລະ ເຮັດໃຫ້ຮຸ້ນ LALCO ກາຍເປັນຮຸ້ນທີ່ມີສ່ວນແບ່ງຕະຫຼາດສູງສຸດເປັນອັນດັບໜຶ່ງ, ຮອງລົງ

ມາ ແມ່ນ BCEL ແລະ EDL-GEN ຕາມລຳດັບ. ສຳລັບມູນຄ່າການຊື້-ຂາຍຮຸ້ນ BCEL ແລະ EDL-GEN ຫຼຸດລົງ ເຊິ່ງອາດມີສາເຫດມາຈາກ ການຫຼຸດການເຄື່ອນໄຫວຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດຕໍ່ກັບຮຸ້ນທັງ 2 ທີ່ມີທ່າອ່ຽງຫຼຸດລົງຫຼາຍໃນປີນີ້ ແລະ ມີສາເຫດອາດມາຈາກການທີ່ BCEL ບໍ່ໄດ້ປັນຜົນໃນຄັ້ງກ່ອນ ແລະ EDL-GEN ມີຜົນການດຳເນີນທຸລະກິດ ທີ່ບໍ່ໂດດເດັ່ນທີ່ຈະດຶງດູດ ຜູ້ລົງທຶນຕ່າງປະເທດໃນປີນີ້.

**ແຜນວາດ 1: ມູນຄ່າການຊື້-ຂາຍຮຸ້ນ ທຽບກັບ ດັດສະນີຂອງ ຕລຊລ (11 ມັງກອນ 2011 – 27 ທັນວາ 2022)**

ຫົວໜ່ວຍ: 1 ລ້ານກີບ




**ແຜນວາດ 2: ການເໜັງຕີງຂອງລາຄາຮຸ້ນ 11 ບໍລິສັດ ໃນ ຕລຊລ (11 ມັງກອນ 2011 – 28 ທັນວາ 2022)**

ຫົວໜ່ວຍ: ກີບ




## 2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ໃນການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ໂດຍສະເພາະບໍລິສັດຫຼັກຊັບ (ປັດຈຸບັນມີ 4 ບໍລິສັດ), ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ກວດກາ ຫົວໜ່ວຍດັ່ງກ່າວ ຢ່າງເປັນປົກກະຕິ ດ້ວຍຮູບການກວດກາທາງເອກະສານປະຈຳເດືອນ, ໄຕມາດ, 6 ເດືອນຕົ້ນປີ ແລະ ປະຈຳປີ. ນອກນັ້ນ, ຍັງໄດ້ມີການຈັດກອງປະຊຸມປະຈຳໄຕມາດ ລະຫວ່າງ ສຄຄຊ

ແລະ ບໍລິສັດຫຼັກຊັບ ເພື່ອປຶກສາຫາລືຕໍ່ກັບສະພາບ ແລະ ທິດທາງໃນການດໍາເນີນທຸລະກິດໃນແຕ່ລະໄລຍະ; ສໍາເລັດການລົງກວດກາແບບແບບປົກກະຕິ ແລະ ແບບສຸກເສີນ ລວມຈໍານວນ 6 ຄັ້ງ ແລະ ໄດ້ນໍາໃຊ້ຂໍ້ມູນຈາກການລົງກວດກາ ເຂົ້າໃນການປະເມີນລະດັບຄວາມສ່ຽງໃນແຕ່ລະດ້ານຂອງບໍລິສັດຫຼັກຊັບ ຕາມຫຼັກການຕີລາຄາຄວາມສ່ຽງ (Risk-Based Supervision). ຜ່ານການກວດກາ ສາມາດຕີລາຄາໄດ້ວ່າ ບໍລິສັດຫຼັກຊັບ ໄດ້ເອົາໃຈໃສ່ເຄື່ອນໄຫວຕາມພາລະບົດບາດຂອງຕົນເປັນຢ່າງດີ ແລະ ບໍ່ມີປະກົດການຫຍໍ້ທໍ້ທີ່ຮ້າຍແຮງເກີດຂຶ້ນ. ພ້ອມນີ້, ຕິດພັນກັບການຂະຫຍາຍຈໍານວນບໍລິສັດຫຼັກຊັບ ສຄຄຊ ໄດ້ສໍາເລັດການຄົ້ນຄວ້າການສະເໜີຂໍອະນຸຍາດດໍາເນີນທຸລະກິດຂອງບໍລິສັດຫຼັກຊັບ 1 ແຫ່ງ ແຕ່ບໍ່ສາມາດອະນຸຍາດໄດ້ ເນື່ອງຈາກເງື່ອນໄຂຍັງບໍ່ຄົບຖ້ວນຕາມລະບຽບການກ່ຽວຂ້ອງກໍານົດໄວ້. ສໍາລັບການຈັດຕັ້ງປະຕິບັດວຽກງານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (Anti-money laundering: AML) ສຄຄຊ ກໍ່ໄດ້ຊຸກຍູ້ໃຫ້ບໍລິສັດຫຼັກຊັບຍົກສູງສະຕິຄວາມຮັບຜິດຊອບ ແລະ ຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

ສໍາລັບການຄຸ້ມຄອງສະຖາບັນສີກາງດ້ານຫຼັກຊັບອື່ນ ທີ່ຖືກຮັບຮອງຈາກ ສຄຄຊ ໃຫ້ເຂົ້າມາເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບນັ້ນ, ສຄຄຊ ໄດ້ເອົາໃຈໃສ່ຕິດຕາມກວດກາບັນດາສະຖາບັນດັ່ງກ່າວຜ່ານທາງເອກະສານ ຢ່າງເປັນປົກກະຕິ, ພ້ອມທັງ ສໍາເລັດການພັດທະນາ ແລະ ນໍາໃຊ້ລະບົບ online filling, approval and reporting (OFAR) ເພື່ອເປັນອີກໜຶ່ງຊ່ອງທາງໃນການນໍາສົ່ງເອກະສານລາຍງານລະຫວ່າງ ສະຖາບັນສີກາງ ແລະ ຜູ້ຄຸ້ມຄອງ. ການຄຸ້ມຄອງໃນໄລຍະ 1 ປີຜ່ານມາ ເຫັນວ່າບັນດາສະຖາບັນສີກາງດ້ານຫຼັກຊັບ ໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ ແລະ ສອດຄ່ອງຕາມນິຕິກໍາທີ່ກ່ຽວຂ້ອງກໍານົດໄວ້. ພ້ອມນີ້, ສຄຄຊ ກໍ່ໄດ້ສໍາເລັດການຄົ້ນຄວ້າລາຍງານ ຂໍທິດຊີ້ນໍາຈາກສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ກ່ຽວກັບຜູ້ຄຸ້ມຄອງຫຼັກຂອງ ບໍລິສັດປະເມີນມູນຄ່າຊັບສິນ ຢູ່ ສປປ ລາວ; ສໍາເລັດການຄົ້ນຄວ້າອອກໃບຮັບຮອງທະນາຄານຕົວແທນເພື່ອການຊໍາລະ-ສະສາງໃນວຽກງານຫຼັກຊັບ ໃຫ້ແກ່ທະນາຄານທຸລະກິດ ຈໍານວນ 3 ແຫ່ງ ແລະ ໃບຮັບຮອງຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຈໍານວນ 4 ແຫ່ງ; ສໍາເລັດການຄົ້ນຄວ້າຕໍ່ອາຍຸໃບຮັບຮອງການເຄື່ອນໄຫວໃນວຽກງານຫຼັກຊັບໃຫ້ແກ່ ບໍລິສັດກວດສອບ 1 ແຫ່ງ, ທະນາຄານດູແລຊັບສິນ 1 ແຫ່ງ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື 1 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ 6 ແຫ່ງ, ຫ້ອງການຜູ້ຕາງໜ້າບໍລິສັດຫຼັກຊັບຕ່າງປະເທດ 1 ແຫ່ງ ແລະ ຄົ້ນຄວ້າການສະເໜີຂໍຮັບຮອງບໍລິສັດກວດສອບ 1 ແຫ່ງ ແຕ່ບໍ່ຜ່ານການຮັບຮອງ ເນື່ອງຈາກເງື່ອນໄຂຂອງບໍລິສັດກວດສອບດັ່ງກ່າວ ຍັງບໍ່ຄົບຖ້ວນຕາມລະບຽບການກ່ຽວຂ້ອງກໍານົດໄວ້.

ນອກຈາກນີ້, ສຄຄຊ ໄດ້ຖືສໍາຄັນໃນການຄຸ້ມຄອງ ແລະ ກໍ່ສ້າງນັກວິຊາຊີບ ໃນຂົງເຂດວຽກງານຫຼັກຊັບ ແນໃສ່ຮັບປະກັນໃຫ້ການບໍລິການແກ່ລູກຄ້າ ມີປະສິດທິພາບ, ສອດຄ່ອງຕາມລະບຽບກົດໝາຍ ແລະ ຖືກຕ້ອງຕາມມາດຕະຖານຂອງວິຊາຊີບທີ່ກ່ຽວຂ້ອງ, ອັນພົ້ນເດັ່ນ ແມ່ນໄດ້ສໍາເລັດຄົ້ນຄວ້າຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ 3 ຫຼັກສູດ (ນາຍໜ້າຊື້-ຂາຍຫຼັກຊັບ, ນັກວິເຄາະຫຼັກຊັບ ແລະ ທີ່ປຶກສາທາງດ້ານການເງິນ), ສໍາເລັດການຄົ້ນຄວ້າອອກ-ຕໍ່ອາຍຸໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈໍານວນ 20 ທ່ານ, ຜູ້ກວດສອບບັນຊີ 5 ທ່ານ ແລະ ຜູ້ປະເມີນມູນຄ່າຊັບສິນ 14 ທ່ານ.

ຮອດປັດຈຸບັນ, ວຽກງານຫຼັກຊັບຂອງ ສປປ ລາວ ມີຈໍານວນສະຖາບັນສີກາງດ້ານຫຼັກຊັບ ແລະ ຊົມລົມທີ່ກ່ຽວຂ້ອງ ລວມກັນທັງໝົດຈໍານວນ 29 ແຫ່ງ, ໃນນັ້ນມີ ບໍລິສັດຫຼັກຊັບ 4 ແຫ່ງ, ບໍລິສັດກວດສອບ 3 ແຫ່ງ, ບໍລິສັດປະ

ເມີນມູນຄ່າຊັບສິນ 8 ແຫ່ງ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື 1 ແຫ່ງ, ທະນາຄານດູແລຊັບສິນ 3 ແຫ່ງ, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ 4 ແຫ່ງ, ທະນາຄານຕົວແທນເພື່ອການຊໍາລະ-ສະສາງໃນວຽກງານຫຼັກຊັບ 3 ແຫ່ງ, ຫ້ອງການຜູ້ຕາງໜ້າບໍລິສັດຫຼັກຊັບຕ່າງປະເທດ 1 ແຫ່ງ, ຊົມລົມບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ 1 ແຫ່ງ ແລະ ຊົມລົມບໍລິສັດປະເມີນມູນຄ່າຊັບສິນ 1 ແຫ່ງ. ຄຽງຄູ່ກັນນັ້ນ, ນັກວິຊາຊີບທີ່ຖືກຮັບຮອງໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ທັງໝົດ 56 ຄົນ ປະກອບມີ: ນັກວິຊາຊີບທຸລະກິດຫຼັກຊັບ 26 ຄົນ (ທີ່ປຶກສາທາງດ້ານການເງິນ 9 ຄົນ, ນາຍໜ້າຊື້-ຂາຍຫຼັກຊັບ 9 ຄົນ, ຜູ້ວິເຄາະຫຼັກຊັບ 1 ຄົນ, ຜູ້ຄ້າຫຼັກຊັບ 3 ຄົນ, ຜູ້ບໍລິຫານກອງທຶນເພື່ອການລົງທຶນ 2 ຄົນ ແລະ ທີ່ປຶກສາການລົງທຶນ 2 ຄົນ), ນັກວິຊາຊີບກວດສອບ 10 ຄົນ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 20 ຄົນ.

## 2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ອີງຕາມຄໍາສັ່ງຂອງ ທ່ານ ນາຍົກລັດຖະມົນຕີ ກ່ຽວກັບການປັບປຸງຕົວຊີ້ວັດຂອງບົດລາຍງານການດໍາເນີນທຸລະກິດ ຂອງ ສປປ ລາວ ເລກທີ 02/ນຍ[1] ລົງວັນທີ 01 ກຸມພາ 2018 ຕິດພັນກັບການຄຸ້ມຄອງວຽກງານຫຼັກຊັບ, ໃນໄລຍະຜ່ານມາ ສຄຄຊ ໄດ້ສໍາເລັດການສ້າງ ແລະ ປັບປຸງນິຕິກໍາໃນຂົງເຂດວຽກງານຫຼັກຊັບ ທີ່ກ່ຽວຂ້ອງກັບການປັບປຸງຕົວຊີ້ວັດດັ່ງກ່າວ ຈໍານວນໜຶ່ງ ແລະ ໄດ້ປະກອບສ່ວນຄົ້ນຄວ້າການປັບປຸງກົດໝາຍວ່າດ້ວຍວິສາຫະກິດ.

ຄຽງຄູ່ກັນນີ້, ສຄຄຊ ຍັງໄດ້ສໍາເລັດການຕິດຕາມກວດກາການເຄື່ອນໄຫວຂອງບໍລິສັດນອກວັດຖຸປະສົງຈໍານວນໜຶ່ງ ພ້ອມທັງ, ປະສານຫາພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມ ແລະ ພິຈາລະນາດໍາເນີນການແກ້ໄຂ ແລະ ສະໜອງຂໍ້ມູນທີ່ຈໍາເປັນຕິດພັນກັບວຽກງານຫຼັກຊັບໃຫ້ແກ່ການດໍາເນີນຄະດີຂອງເຈົ້າໜ້າທີ່ຕໍາຫຼວດ. ພ້ອມນີ້, ກໍ່ໄດ້ສືບຕໍ່ເປີດນໍາໃຊ້ຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ໃນກໍລະນີສົງໃສວ່າມີການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ໂດຍສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານ 04 ຊ່ອງທາງ ດັ່ງລຸ່ມນີ້:

1) ມາຮ້ອງຟ້ອງ ຫຼື ແຈ້ງຄວາມດ້ວຍຕົນເອງ ຢູ່ທີ່ຕຶກຫ້ອງການ ສຄຄຊ;
2) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໄປສະນີ;
3) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໂທລະສັບ (ເບີໂທສາຍດ່ວນ 1602);
4) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງ ອີເມວ ແລະ ເວັບໄຊທ໌ຂອງ ຄຄຊ (www.lsc.gov.la).




## 2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກໍາໃນຂົງເຂດວຽກງານຫຼັກຊັບ

ໃນປີ 2022 ສຄຄຊ ໄດ້ເອົາໃຈໃສ່ຕິດຕາມ ແລະ ຈັດຕັ້ງປະຕິບັດນິຕິກໍາທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເຊິ່ງຜ່ານການຕິດຕາມ, ກວດກາ ເຫັນວ່າ: ມີບໍລິສັດຈົດທະບຽນ ຈໍານວນໜຶ່ງ ໄດ້ເຄື່ອນໄຫວບໍ່ສອດຄ່ອງກັບ ກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການກ່ຽວຂ້ອງກັບວຽກງານຫຼັກຊັບ ຊຶ່ງ ສຄຄຊ ໄດ້ຄົ້ນຄວ້າ ແລະ ປະຕິບັດມາດຕະການປັບໄໝຕໍ່ ບໍລິສັດຈົດທະບຽນ ຈໍານວນ 1 ກໍລະນີ.

[1] ຄໍາສັ່ງເລກທີ 02/ນຍ: ຄໍາສັ່ງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດໍາເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018.

## 2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່

ສຄຄຊ ໄດ້ສຸມໃສ່ພັດທະນາວຽກງານຝຶກອົບຮົມກ່ຽວກັບວຽກງານຕະຫຼາດທຶນ ໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວ ເຊິ່ງໃນປີ 2022 ສຳເລັດການຈັດຝຶກອົບຮົມຫຼັກສູດ ຝຶກອົບຮົມສຳລັບຜູ້ບໍລິຫານທີ່ມີຄຸນນະພາບ ເພື່ອການບໍລິຫານແບບມືອາຊີບ (Board Leadership Program) 1 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 37 ທ່ານ; ສຳເລັດການຈັດຝຶກອົບຮົມໄລຍະສັ້ນ 2 ຫົວຂໍ້ ຄື: ຜົນປະໂຫຍດການລົງທຶນໃນຮຸ້ນສາມັນ ແລະ ການວິເຄາະຮຸ້ນດ້ວຍປັດໃຈພື້ນຖານ ໃຫ້ແກ່ ຄູ-ອາຈານ, ບັນດາມວນຊົນທົ່ວໄປ ໃນຂອບເຂດນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ລວມຈຳນວນ 5 ຄັ້ງ ມີຜູ້ເຂົ້າຮ່ວມ 194 ເທື່ອຄົນ; ສຳເລັດການຈັດຝຶກອົບຮົມບັນດາລະບຽບການທີ່ຕິດພັນກັບວຽກງານຫຼັກຊັບທີ່ສ້າງ ແລະ ປັບປຸງໃໝ່ ໃຫ້ແກ່ນັກວິຊາຊີບທຸລະກິດຫຼັກຊັບ 1 ຄັ້ງ ມີຜູ້ເຂົ້າຮ່ວມຈຳນວນ 33 ທ່ານ. ນອກນີ້, ໄດ້ສຳເລັດສ້າງຫຼັກສູດຝຶກອົບຮົມວຽກງານຫຼັກຊັບ ໄລຍະສັ້ນ 3 ຫົວຂໍ້, ພ້ອມທັງ ໄດ້ເລີ່ມຄົ້ນຄວ້າຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບປະເພດທີ່ປຶກສາດ້ານການເງິນ (FA) ແລະ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບປະເພດຜູ້ບໍລິຫານກອງທຶນ (FM) ຊຶ່ງຄາດໝາຍສຳເລັດໃນປີ 2023 ໂດຍຈຸດປະສົງເພື່ອສ້າງ ແລະ ຍົກລະດັບຄວາມຮູ້ ຄວາມສາມາດຂອງນັກວິຊາຊີບໃນຂົງເຂດຕະຫຼາດທຶນລາວ.

ພ້ອມນີ້ ໃນປີ 2022 ກໍ່ໄດ້ມີການຈັດໂຄສະນາເຜີຍແຜ່ໃຫ້ມວນຊົນ ແລະ ບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນມີຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ສາມາດມີສ່ວນຮ່ວມໃນການພັດທະນາຕະຫຼາດທຶນ ໄດ້ຢ່າງຖືກຕ້ອງຕາມລະບຽບການກຳນົດ, ສຄຄຊ ໄດ້ຈັດກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມ ເປັນຕົ້ນແມ່ນ ບັນດາອົງການພາກລັດ, ສະຖາບັນການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ລວມຈຳນວນ 6 ຄັ້ງ ມີຜູ້ເຂົ້າຮ່ວມ ຈຳນວນ 381 ເທື່ອຄົນ; ສຳເລັດການເຜີຍແຜ່ບັນດາລະບຽບການທີ່ມີການສ້າງໃໝ່ ແລະ ປັບປຸງ ໃຫ້ແກ່ບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ລວມທັງໝົດ 5 ຄັ້ງ ມີຜູ້ເຂົ້າຮ່ວມ ຈຳນວນ 81 ເທື່ອຄົນ; ໂຄສະນາເຜີຍແຜ່ໃຫ້ແກ່ເປົ້າໝາຍບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ຈຳນວນ 2 ຄັ້ງ ມີຜູ້ເຂົ້າຮ່ວມ ຈຳນວນ 123 ເທື່ອຄົນ ໄດ້ສຳເລັດຈັດກອງປະຊຸມເຜີຍແຜ່ຄວາມຮູ້ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມ ລວມທັງ ບັນດາອົງການພາກລັດ, ສະຖາບັນການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ຈຳນວນ 05 ຄັ້ງ ມີຜູ້ເຂົ້າຮ່ວມ ຈຳນວນ 694 ເທື່ອຄົນ; ສຳເລັດການເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຈຳນວນ 01 ຄັ້ງ ມີຜູ້ເຂົ້າຮ່ວມ ຈຳນວນ 197 ທ່ານ ແລະ ສຳເລັດການເຜີຍແຜ່ນິຕິກຳທີ່ຕິດພັນກັບບໍລິສັດຈົດທະບຽນ ຈຳນວນ 03 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 109 ເທື່ອຄົນ.

ຄຽງຄູ່ກັນນີ້, ສຄຄຊ ໂຄສະນາເຜີຍແຜ່ຜ່ານທາງໂທລະພາບ ແລະ ສື່ອອນລາຍຕ່າງໆ ເປັນຕົ້ນ ການສ້າງພາບສະແດງຂໍ້ມູນ (Infrographic) ກ່ຽວກັບວຽກງານຫຼັກຊັບ ຈຳນວນ 22 ພາບ, ສ້າງກາຕູນ Animation ຈຳນວນ 4 ຫົວຂໍ້, ສ້າງປຶ້ມສັບ (Booklet) ກ່ຽວກັບຄວາມເຂົ້າໃຈພື້ນຖານດ້ານ ຫຼັກຊັບ ແລະ ການຊື້-ຂາຍ, ສ້າງວິດີໂອສັ້ນ ສາລະຕະຫຼາດທຶນ ຈຳນວນ 17 ຫົວຂໍ້, ຖ່າຍທຳ Podcast ຈຳນວນ 18 ຫົວຂໍ້, ສຳພາດຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ ຈຳນວນ 5 ທ່ານ ແລະ ເກັບກຳຂ່າວການເຄື່ອນໄຫວວຽກງານໃນຂົງເຂດຕະຫຼາດທຶນ ຈຳນວນ 32 ຄັ້ງ ເພື່ອເຜີຍແຜ່ຜ່ານລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ” ແລະ ສື່ອອນລາຍຂອງ ສຄຄຊ (Website, Facebook ແລະ YouTube ຂອງ ສຄຄຊ), ໄດ້ຮັບການສະໜັບສະໜູນລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ” ຈາກບັນດາຜູ້ມີຊ່ວຍຮ່ວມໃນວຽກງານຕະຫຼາດທຶນ ຈຳນວນ 8 ພາກສ່ວນ ເພື່ອໃຫ້ວຽກງານຕະຫຼາດທຶນລາວເປັນທີ່ຮູ້ຈັກຂອງສັງຄົມ

ຫຼາຍຂຶ້ນ. ພ້ອມທັງ ໄດ້ສຳເລັດການສ້າງ Spot ໂຄສະນາ ຈຳນວນ 5 ຫົວຂໍ້ ເພື່ອເຜີຍແຜ່ຜ່ານສະຖານີວິທະຍຸແຫ່ງຊາດລາວ FM 103,7 ແລະ ສະຖານີວິທະຍຸສາກົນແຫ່ງປະເທດຈີນ (CRI) FM 93.0 ພ້ອມທັງ ປະກອບສ່ວນ ແລະ ກຳນົດເນື້ອໃນໃນການເຜີຍແຜ່ວຽກງານຕະຫຼາດທຶນໃນລາຍການວິທະຍຸຂອງເພື່ອນທະນາຄານ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ມວນຊົນຮັບຮູ້ ແລະ ເຂົ້າໃຈວຽກງານຫຼັກຊັບຫຼາຍຍິ່ງຂຶ້ນ.

**ຮູບພາບ 5: ບັນຍາກາດການຈັດຝຶກອົບຮົມ "ການວິເຄາະຮຸ້ນດ້ວຍປັດໃຈພື້ນຖານ"**




**ຮູບພາບ 6: ບັນຍາກາດການລົງໂຄສະນາເຜີຍແຜ່ ວຽກງານຕະຫຼາດທຶນ**



### ຮູບພາບ 7: ຜະລິດສື່ໂຄສະນາຜ່ານລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ” ແລະ ສື່ອອນລາຍ



## 2.8 ການຮ່ວມມືສາກົນ

ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານພົວພັນຮ່ວມມືກັບສາກົນ ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ກັບອົງການຈັດຕັ້ງສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນສະໜັບສະໜູນ ເພື່ອຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ, ແລກປ່ຽນຂໍ້ມູນຂ່າວສານ ແລະ ພັດທະນາວຽກງານຕະຫຼາດທຶນ.

ໃນຮູບແບບສອງຝ່າຍ, ສຄຄຊ ໄດ້ຮ່ວມມືກັບ ຄຄຊ ສປ.ຈີນ, ຫວຽດນາມ, ໄທ, ສະຖາບັນ IOD ໄທ, ສະຖາບັນ CPA Australia, ຕະຫຼາດຫຼັກຊັບໄທ ແລະ ລັດຖະບານລຸກຊໍາບວກ ຢ່າງເປັນປົກກະຕິ. ອັນພົ້ນເດັ່ນ ໄດ້ສໍາເລັດການຂຶ້ນແຜນການຮ່ວມມື ແລະ ສະເໜີຂໍການຊ່ວຍເຫຼືອທາງດ້ານວິຊາການ ກັບ ຄຄຊ ສສ.ຫວຽດນາມ ແລະ ຄຄຊ ສປ.ຈີນ ແລະ ກລຕ ໄທ ປະຈໍາປີ 2022; ສໍາເລັດການຈັດກອງປະຊຸມຮ່ວມມື 2 ຝ່າຍປະຈໍາປີ ລະຫວ່າງ ສຄຄຊ ແລະ ຄຄຊ ສສ. ຫວຽດນາມ, ສືບຕໍ່ຈັດຕັ້ງປະຕິບັດໂຄງການຮ່ວມມື ລະຫວ່າງ ລັດຖະບານລາວ ແລະ ລັດຖະບານລຸກຊໍາບວກ (LAO/032) ໂດຍເລັ່ງໃສ່ການກະກຽມຄວາມພ້ອມໃນການນໍາເອົາລັດວິສາຫະກິດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ, ສໍາເລັດການສ້າງຄູ່ມື IPO Roadmap ແລະ ພັດທະນາວຽກງານເຜີຍແຜ່ຄວາມຮູ້ວຽກງານຫຼັກຊັບ. ພ້ອມນີ້, ພາຍໃຕ້ການຮ່ວມມືສອງຝ່າຍ ໄດ້ຈັດກອງປະຊຸມສໍາມະນາຮ່ວມກັບ ຄຄຊ ສສ.ຫວຽດນາມ, ຄຄຊ ສປ.ຈີນ ແລະ ກລຕ ໄທ ຜ່ານທາງອອນລາຍ ແລະ ກັບທີ່ຢູ່ນະຄອນຫຼວງວຽງຈັນ ຈໍານວນ 5 ຄັ້ງ. ນອກນີ້, ໄດ້ສໍາເລັດການເຂົ້າຮ່ວມຝຶກອົບຮົມແລກປ່ຽນບົດຮຽນໃນຫົວຂໍ້: ກະດານຮອງ (UPCoM market) ຢູ່ ສສ.ຫວຽດນາມ ພາຍໃຕ້ໂຄງການລຸກຊໍາບວກ (LAO/032), ສໍາເລັດການເຂົ້າຮ່ວມການແລກປ່ຽນບົດຮຽນໃນຫົວຂໍ້ ການເປີດເຜີຍຂໍ້ມູນ ແລະ ການຄຸ້ມຄອງບໍລິຫານໃຫ້ແກ່ບໍລິສັດຈົດທະບຽນ ຢູ່ປະເທດໄທ ແລະ ສໍາເລັດການເຂົ້າຮ່ວມການສໍາມະນາ Thailand focus 2022 ຜ່ານທາງອອນລາຍ.

**ຮູບພາບ 8: ການເຂົ້າຮ່ວມຝຶກອົບຮົມແລກປ່ຽນບົດຮຽນ ຢູ່ ສສ.ຫວຽດນາມ**



**ຮູບພາບ 9 : ກອງປະຊຸມສຳມະນາໃນຫົວຂໍ້: ການພັດທະນາຕະຫຼາດທຶນ ລະຫວ່າງ ສຄຄຊ ແລະ ຄຄຊ ສປ.ຈີນ (ຜ່ານລະບົບອອນລາຍ)**




ໃນຮູບແບບຫຼາຍຝ່າຍ, ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບວຽກງານຫຼັກຊັບໃນຂອບ ASEAN ແລະ ASEAN+3 ເປັນປົກກະຕິ (ກັບທີ່ ແລະ ອອນລາຍ) ຈຳນວນ 16 ຄັ້ງ ມີຜູ້ເຂົ້າຮ່ວມ 66 ເທື່ອຄົນ, ສຳເລັດການຈັດສຳມະນາອອນລາຍ ໃນກອບ WC-CMD SCCB ໃນຫົວຂໍ້ Securities delisting ມີຜູ້ເຂົ້າຮ່ວມ 30 ທ່ານ.

**ຮູບພາບ 10: ການເຂົ້າຮ່ວມກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (ASEAN Capital Markets Forum : ACMF Chair meeting) ຄັ້ງທີ 37 ຢູ່ປະເທດກຳປູເຈຍ**



ສຳລັບການຮ່ວມມືກັບອົງການຈັດຕັ້ງສາກົນ ຄື ທະນາຄານພັດທະນາອາຊີ, ທະນາຄານໂລກ ແລະ ອົງການການເງິນສາກົນໄດ້ສຳເລັດການຈັດກອງປະຊຸມປຶກສາຫາລື ແລະ ຈັດສຳມະນາຮ່ວມກັນ ຈຳນວນ 8 ຄັ້ງ ມີຜູ້ເຂົ້າຮ່ວມ 187 ເທື່ອຄົນ ເປັນຕົ້ນ ການຈັດກອງປະຊຸມສຳມະນາ ໃນຫົວຂໍ້ “ການເງິນແບບຍືນຍົງ”, ການຈັດກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນກ່ຽວຂ້ອງ ຕິດພັນກັບການອອກພັນທະບັດຫຼາຍສະກຸນເງິນໃນປະເທດອາຊຽນ+3 (Single Submission Form: SSF) ແລະ ແຜນພັດທະນາຕະຫຼາດຮຸ້ນກູ້ ໃນ ສປປ ລາວ. ພ້ອມນີ້, ສຳລັບການກະກຽມຄວາມພ້ອມຮອບດ້ານໃນການສະໝັກເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງຫຼັກຊັບສາກົນ (IOSCO), ສຄຄຊ ໄດ້ສຳເລັດການເຂົ້າຮ່ວມໂຄງການໃຫ້ຄຳປຶກສາທາງດ້ານວິຊາການແບບລົງເລິກ ຮ່ວມກັບຊ່ຽວຊານ ແລະ ກອງເລຂາ IOSCO ແລະ ສຳເລັດການປັບປຸງຊຸດເອກະສານສະເໜີເຂົ້າເປັນສະມາຊິກສົມບູນຂອງ IOSCO ຕາມຄຳເຫັນຂອງຊ່ຽວຊານ.

**ຮູບພາບ 11: ການຈັດກອງປະຊຸມສຳມະນາ ໃນຫົວຂໍ້: ການພັດທະນາຮຸ້ນກູ້ ໃນ ສປປ ລາວ ຈັດໂດຍ ສຄຄຊ ຮ່ວມກັບອົງການ IFC**



## III. ທິດທາງແຜນການ ປີ 2023

### 1. ຄາດຄະເນສະພາບຕະຫຼາດທຶນຂອງ ຕ່າງປະເທດ

ສະພາບຕະຫຼາດທຶນຂອງຕ່າງປະເທດ ຄາດວ່າຈະມີທັງກາລະໂອກາດ ແລະ ສິ່ງທ້າທາຍ ຈາກສະພາບຄວາມບໍ່ແນ່ນອນຂອງເສດຖະກິດໂລກ ເປັນຕົ້ນ ຄວາມຜັນຜວນທາງດ້ານການເມືອງ, ພາວະເງິນເຟີ້ຂອງບັນດາປະເທດໃນທົ່ວໂລກ ບວກກັບ ໄພຂົ່ມຂູ່ຈາກທຳມະຊາດ, ໂລກລະບາດ ແລະ ບັນຫາອື່ນໆ ຊຶ່ງຄາດວ່າຈະສົ່ງຜົນກະທົບ ຕໍ່ກັບເສດຖະກິດ ແລະ ບັນຍາກາດການລົງທຶນໃນຫຼັກຊັບ ຢູ່ໃນທົ່ວໂລກ ໂດຍສະເພາະ ຄວາມວິຕົກກັງວົນຂອງຜູ້ລົງທຶນ ຕໍ່ນະໂຍບາຍແກ້ໄຂ ແລະ ມາດຕະການກະຕຸ້ນເສດຖະກິດຂອງແຕ່ລະປະເທດ ເປັນຕົ້ນ ນະໂຍບາຍຂອງທະນາຄານກາງຂອງປະເທດມະຫາອຳນາດທາງດ້ານເສດຖະກິດ ກໍ່ຈະຍັງເປັນປັດໃຈໜຶ່ງ ສົ່ງຜົນກະທົບຕໍ່ກັບທິດທາງເສດຖະກິດໂລກ ແລະ ການຕັດສິນໃຈລົງທຶນ ໃນຫຼັກຊັບຂອງ ຜູ້ລົງທຶນ ໃນຕະຫຼາດທຶນ.

### 2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ

ໃນປີ 2023 ຄາດວ່າ ຜົນກະທົບຂອງ ໂຄວິດ-19 ຕໍ່ກັບສະພາບການຂອງ ສປປ ລາວ ໄດ້ຫຼຸດຜ່ອນລົງ ພ້ອມທັງສະພາບການເສດຖະກິດໂດຍລວມຂອງ ສປປ ລາວ ກໍ່ຄື ຕະຫຼາດທຶນ ທີ່ຄາດວ່າຈະຟື້ນຕົວດີຂຶ້ນເລັກໜ້ອຍຈາກປີຜ່ານມາ ເປັນຕົ້ນ ຄວາມຫຍຸ້ງຍາກທາງດ້ານການເງິນ, ອັດຕາເງິນເຟີ້ທີ່ມີທ່າອ່ຽງສູງຂຶ້ນ, ບວກກັບ ຜົນການດຳເນີນງານຂອງບາງບໍລິສັດຈົດທະບຽນ ຍັງບໍ່ສາມາດດຶງດູດການລົງທຶນໄດ້ເທົ່າທີ່ຄວນ ຊຶ່ງເຮັດໃຫ້ແນວໂນ້ມຂອງຕະຫຼາດທຶນລາວ ຈະຍັງບໍ່ສາມາດປັບຕົວເພີ່ມຂຶ້ນຢ່າງຄຶກຄື້ນເທົ່າທີ່ຄວນ ໂດຍສະເພາະ ສະພາບຄ່ອງການຊື້-ຂາຍຫຼັກຊັບໃນ ຕລຊລ ແລະ ຄວາມສົນໃຈຂອງຜູ້ລົງທຶນໃນການລະດົມທຶນຜ່ານຕະຫຼາດທຶນ. ພ້ອມດຽວກັນນີ້, ປີ 2023 ຄາດວ່າຈະຍັງເປັນປີທີ່ມີຄວາມທ້າທາຍສຳລັບຕະຫຼາດທຶນຂອງ ສປປ ລາວ ທີ່ຍັງບໍ່ທັນມີບໍລິສັດເຂົ້າຈົດທະບຽນຫຼາຍ ພ້ອມນີ້ ທາງເລືອກໃນການລົງທຶນ ເປັນຕົ້ນ ການຝາກເງິນໃນທະນາຄານທຸລະກິດ ແລະ ລົງທຶນໃນຊັບສິນ ປະເພດວັດຖຸມີຄ່າ ເຫັນວ່າຍັງເປັນທາງເລືອກທີ່ຜູ້ລົງທຶນໃຫ້ຄວາມສົນໃຈ. ສະນັ້ນ, ລາຄາຮຸ້ນໃນຕະຫຼາດຫຼັກຊັບລາວ ເຫັນວ່າ ມີທ່າອ່ຽງຫຼຸດລົງ ເຊິ່ງເປັນປັດໃຈສົ່ງຜົນກະທົບຕໍ່ກັບແນວໂນ້ມທີ່ດັດຊະນີຕະຫຼາດຫຼັກຊັບລາວປັບຕົວຫຼຸດລົງ.

### 3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2022

#### 3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ

ອີງໃສ່ສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ ໄດ້ຮຽກຮ້ອງໃຫ້ມີນິຕິກຳ ເພື່ອຄຸ້ມຄອງບັນດາພຶດຕິກຳ ຫຼື ການເຄື່ອນໄຫວວຽກງານຫຼັກຊັບທີ່ໄດ້ມີການພັດທະນາໃໝ່ ໃນແຕ່ລະໄລຍະ. ສຳລັບປີ 2023 ຄາດໝາຍ ແມ່ນໃຫ້ສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຢ່າງໜ້ອຍ 05 ສະບັບ ເພື່ອເປັນບ່ອນອີງໃນການຄຸ້ມຄອງເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມຄ່ອງຕົວຍິ່ງຂຶ້ນ ໂດຍສະເພາະແມ່ນ ການສ້າງ ແລະ ປັບປຸງນິຕິກຳເພື່ອຮອງຮັບໃຫ້ແກ່ວຽກງານການສ້າງກະດານຮອງ ໃນອານາຄົດ.

#### 3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

ສືບຕໍ່ເອົາໃຈໃສ່ຄົ້ນຄວ້າການສະເໜີອອກຈຳໜ່າຍຫຼັກຊັບໃນປີ 2023 ຢ່າງໜ້ອຍ 02 ກໍລະນີ; ສົມທົບກັບກະຊວງການຄົ້ນຄວ້າລາຍຊື່ເປົ້າໝາຍບໍລິສັດທີ່ເປັນບູລິມະສິດ. ພ້ອມທັງ, ຈັດກອງປະຊຸມສຳມະນາໃຫ້ແກ່ບັນດາລັດວິ

ສາທາລະນະກິດທີ່ນອນຢູ່ໃນເປົ້າໝາຍ, ຊຸກຍູ້ການກະກຽມຄວາມພ້ອມຮອບດ້ານ ເພື່ອຫັນເປັນບໍລິສັດມະຫາຊົນ, ອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນ ຕລຊລ; ຄົ້ນຄວ້າກ່ຽວກັບການລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນກູ້ ຂອງວິສາຫະກິດ ຢູ່ ສປປ ລາວ; ເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງບັນດາບໍລິສັດຈົດທະບຽນ ໃຫ້ສອດຄ່ອງຕາມລະບຽບການ ເປັນຕົ້ນ ການລາຍງານ ແລະ ເປີດເຜີຍຂໍ້ມູນ, ການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຫຼັກຊັບ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ ແລະ ການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນ ພ້ອມທັງ ຕິດຕາມ ການວິເຄາະຊ່ອງຫວ່າງການຂ້າມຜ່ານສູ່ການຈັດຕັ້ງປະຕິບັດ IFRS ຂອງ 11 ບໍລິສັດຈົດທະບຽນ; ຊຸກຍູ້ ແລະ ຕິດຕາມ ໃນການເລີ່ມການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນໃນ ຕລຊລ ໃນປີ 2023.

### 3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ສຄຄຊ ຈະສືບຕໍ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວຢ່າງໃກ້ຊິດ ໂດຍການກວດກາທາງເອກະສານ ແລະ ລົງກວດກາກັບທີ່; ຊຸກຍູ້ ຕລຊລ ຕິດຕາມສະພາບການເໜັງຕີງຂອງລາຄາຮຸ້ນຂອງບັນດາບໍລິສັດຈົດທະບຽນ, ການຊື້-ຂາຍຫຼັກຊັບທີ່ບໍ່ຍຸຕິທຳ ແລະ ລາຍງານຜົນການຊື້-ຂາຍຫຼັກຊັບໃຫ້ແກ່ມວນຊົນຮັບຮູ້ຢ່າງເປັນປົກກະຕິ. ພ້ອມນີ້, ກໍ່ຈະສຶກສາ ແລະ ຄົ້ນຄວ້າກ່ຽວກັບຫຼັກການປະເມີນການເປັນອົງກອນຄຸ້ມຄອງຕົນເອງ (Self Regilatory Organization: SRO); ຄົ້ນຄວ້າກຳນົດຮູບແບບກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund: PE Fund) ຢູ່ ສປປ ລາວ, ສຶກສາ ແລະ ຄົ້ນຄວ້າກ່ຽວກັບກອງທຶນພື້ນຖານໂຄງລ່າງ (Infrastructure Fund) ຂອງຕ່າງປະເທດ ພ້ອມທັງ ຄົ້ນຄວ້າກຳນົດຮູບແບບກອງທຶນພື້ນຖານໂຄງລ່າງ ຢູ່ ສປປ ລາວ; ຄົ້ນຄວ້າສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ສາມາດລະດົມທຶນຜ່ານຕະຫຼາດທຶນ; ສຶກສາຄົ້ນຄວ້າວຽກງານການເງິນຍືນຍົງ ແລະ ແຜນຍຸດທະສາດຂອງກະຊວງຕ່າງໆທີ່ກ່ຽວຂ້ອງ ລວມທັງ ຄົ້ນຄວ້າພັດທະນາພັນທະບັດສີຂຽວ, ສັງຄົມ ແລະ ຍືນຍົງ.

### 3.4 ການຄຸ້ມຄອງສະຖາບັນສີກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ສືບຕໍ່ຕິດຕາມອັດຕາສ່ວນຄວາມພຽງພໍຂອງທຶນ (NCR), ປະເມີນຄວາມສ່ຽງຂອງບໍລິສັດຫຼັກຊັບ ແບບຕີລາຄາຄວາມສ່ຽງ (Risk-Based Supervision) ແລະ ການປະຕິບັດໜ້າທີ່ຂອງບໍລິສັດຫຼັກຊັບຕິດພັນກັບການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT); ຊຸກຍູ້ບໍລິສັດຫຼັກຊັບ ໃນການເຊື່ອມຕໍ່ລະບົບການຊຳລະກັບຫຼາຍທະນາຄານ (Multiple Bank Link) ທີ່ໄດ້ສຳເລັດການພັດທະນາ; ຊຸກຍູ້ບໍລິສັດຫຼັກຊັບ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສຶກສາຄວາມເປັນໄປໄດ້ໃນການພັດທະນາລະບົບການຊື້-ຂາຍຫຼັກຊັບ ຜ່ານມືຖື (Mobile Trading App) ແລະ ລະບົບເຊື່ອມຕໍ່ການຊື້-ຂາຍຮຸ້ນ (Ledger System); ຊຸກຍູ້ການຂະຫຍາຍຖານລູກຄ້າຂອງສະຖາບັນສີກາງດ້ານຫຼັກຊັບທີ່ມີຢູ່ແລ້ວ ໃຫ້ກວ້າງຂວາງຂຶ້ນ ແລະ ເພີ່ມຊ່ອງທາງອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ; ຊຸກຍູ້ ບໍລິສັດຫຼັກຊັບ ທີ່ໄດ້ຮັບການອະນຸຍາດດຳເນີນທຸລະກິດຫຼັກຊັບປະເພດບໍລິຫານກອງທຶນສ່ວນບຸກຄົນ ໃຫ້ມີການສະເໜີຂໍສ້າງຕັ້ງກອງທຶນສ່ວນບຸກຄົນຢູ່ ສປປ ລາວ; ຊຸກຍູ້ການສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ເປັນຕົ້ນ ຫຼັກສູດທີ່ປຶກສາທາງດ້ານການເງິນ ແລະ ຫຼັກສູດນັກວິຊາຊີບຜູ້ບໍລິຫານກອງທຶນ, ຊຸກຍູ້ການກໍ່ສ້າງຊ່ຽວຊານສະເພາະດ້ານ ເພື່ອຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນ ຂອງສະຖາບັນສີກາງດ້ານຫຼັກຊັບ ເປັນຕົ້ນແມ່ນ ການສົ່ງພະນັກງານໄປຝຶກອົບຮົມວຽກງານສະເພາະດ້ານກ່ຽວກັບວຽກງານຕະຫຼາດທຶນ ທັງພາຍໃນ ແລະ ຕ່າງປະເທດ ແລະ ເຂົ້າຮ່ວມຝຶກອົບຮົມ

ຫຼັກສູດນັກວິຊາຊີບຫຼັກຊັບ ທີ່ຈັດຂຶ້ນໃນແຕ່ລະໄລຍະ; ຊຸກຍູ້ສະຖາບັນສີກາງ ພັດທະນາດ້ານການຄຸ້ມຄອງບໍລິຫານພາຍໃນ ໃຫ້ມີປະສິດທິພາບ ແລະ ເຂັ້ມແຂງ ເພື່ອຮັບປະກັນຄວາມສະຖຽນຂອງລະບົບການໃຫ້ບໍລິການຂອງຕົນ, ສ້າງລະບຽບ ແລະ ຄູ່ມືປະຕິບັດງານພາຍໃນ ໃຫ້ຄົບຖ້ວນ; ຄົ້ນຄວ້າກຳນົດແນວຄວາມຄິດໃນການສ້າງລະບຽບການ ເພື່ອຮອງຮັບການບໍລິການການຢືມຫຼັກຊັບເພື່ອຂາຍ (Short Sell), ການໃຫ້ບໍລິການສິນເຊື່ອເພື່ອຊື້ຫຼັກຊັບ (Margin Trading) , ການກູ້ຢືມໂດຍໃຊ້ຫຼັກຊັບຄ້ຳປະກັນ (Securities Borrowing and Lending) ແລະ ການເຮັດໜ້າທີ່ເປັນຜູ້ສ້າງສະພາບຄ່ອງໃຫ້ແກ່ຕະຫຼາດ (Liquidity Provider); ສຶກສາຄົ້ນຄວ້າສະມາຄົມທຸລະກິດຫຼັກຊັບເພື່ອສ້າງຄວາມເຂັ້ມແຂງໃຫ້ສະຖາບັນສີກາງດ້ານຫຼັກຊັບ; ຄົ້ນຄວ້າກ່ຽວກັບຜູ້ຄຸ້ມຄອງຫຼັກບໍລິສັດປະເມີນມູນຄ່າຊັບ ຢູ່ ສປປ ລາວ ແລະ ສືບຕໍ່ຕິດຕາມ ແລະ ກວດກາການເຄື່ອນໄຫວທຸລະກິດ ຂອງສະຖາບັນສີກາງດ້ານຫຼັກຊັບອື່ນຜ່ານທາງເອກະສານ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ບໍລິສັດຫຼັກຊັບ.

### 3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ສຄຄຊ ຈະສືບຕໍ່ໃນການຕິດຕາມ ແລະ ກວດກາ ໃນການຈັດຕັ້ງປະຕິບັດນິຕິກຳໃຫ້ເຂັ້ມງວດ ພ້ອມທັງສະກັດກັ້ນ ແລະ ແກ້ໄຂ ການລະເມີດລະບຽບກົດໝາຍ ໃຫ້ຫຼຸດລົງເທື່ອລະກ້າວ ດ້ວຍຮູບການສ້າງ ແລະ ປັບປຸງ ນິຕິກຳທີ່ກ່ຽວຂ້ອງ. ພ້ອມນີ້ ເພື່ອປະຕິບັດຕາມຄຳສັ່ງ ເລກທີ 02/ນຍ ສຄຄຊ ຈະສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳທີ່ຕິດພັນກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ ໃນຂົງເຂດວຽກງານຫຼັກຊັບ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງນິຕິກຳທີ່ກ່ຽວຂ້ອງກັບພາກສ່ວນອື່ນທີ່ຕິດພັນກັບວຽກງານດັ່ງກ່າວ ເປັນຕົ້ນແມ່ນ ປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການປັບປຸງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ໂດຍສະເພາະແມ່ນບົດບັນຍັດທີ່ກ່ຽວຂ້ອງກັບບໍລິສັດມະຫາຊົນ ໃຫ້ສຳເລັດຕາມແຜນທີ່ໄດ້ກຳນົດໄວ້ ພ້ອມນີ້ ສຄຄຊ ຍັງຈະໄດ້ສະເໜີຕໍ່ກັບພາກສ່ວນດັ່ງກ່າວໃນການຜັນຂະຫຍາຍເນື້ອໃນຂອງບາງມາດຕາຂອງ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ອອກເປັນນິຕິກຳໃຕ້ກົດໝາຍ ເພື່ອໃຫ້ຕົວຊີ້ວັດດັ່ງກ່າວ ໄດ້ຮັບການປັບປຸງດີຂຶ້ນ. ນອກນັ້ນ ຈະເພີ່ມທະວີໃນການໂຄສະນາເຜີຍແຜ່ ໃຫ້ມວນຊົນ ຮັບຮູ້ ແລະ ເຂົ້າໃຈຕໍ່ລະບຽບກົດໝາຍດັ່ງກ່າວ ໃນຂົງເຂດວຽກງານຫຼັກຊັບ ແລະ ຂົງເຂດກ່ຽວຂ້ອງທີ່ປິ່ນອ້ອມກັບວຽກງານຫຼັກຊັບ. ພ້ອມທັງ, ເອົາໃຈໃສ່ຕິດຕາມ ຜ່ານຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງໃຫ້ເລິກເຊິ່ງ ແລະ ກວ້າງຂວາງຂຶ້ນກວ່າເກົ່າ.

### 3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ

ເພື່ອເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຂອງ ສປປ ລາວ ນັບມື້ນັບຫຼາຍຂຶ້ນ, ສຄຄຊ ຈະສົມທົບກັບ ຕລຊລ ແລະ ບໍລິສັດຫຼັກຊັບ ຄົ້ນຄວ້າສ້າງຫຼັກສູດຝຶກອົບຮົມວຽກງານຫຼັກຊັບ ແລະ ຫຼັກສູດສຳລັບນັກວິຊາຊີບທຸລະກິດຫຼັກຊັບ ພ້ອມທັງ ຈັດຝຶກອົບຮົມໃຫ້ນັກວິຊາຊີບທຸລະກິດຫຼັກຊັບ (Refreshment) ຢ່າງໜ້ອຍ 1 ຄັ້ງ/ປີ. ພ້ອມດຽວກັນນີ້, ຈະສືບຕໍ່ປັບປຸງເນື້ອໃນ ແລະ ຮູບແບບໂຄສະນາເຜີຍແຜ່ ເພື່ອໃຫ້ແທດເໝາະກັບແຕ່ລະກຸ່ມເປົ້າໝາຍຜ່ານຊ່ອງທາງໂຄສະນາຕ່າງໆ ເພື່ອໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງຫຼາຍຂຶ້ນ ໂດຍສະເພາະເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ), ລະບຽບການທີ່ກ່ຽວຂ້ອງ ແລະ ໂຄສະນາເຜີຍແຜ່ກັບທົ່ວວຽກງານຕະຫຼາດທຶນໃນຫົວຂໍ້ຕ່າງໆຢ່າງມີຈຸດສຸມ ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມຕາມຄວາມເໝາະສົມ; ຄຽງຄູ່ກັນນັ້ນ ເພື່ອສ້າງເງື່ອນໄຂ ໃຫ້ກັບສັງຄົມທຸກພາກສ່ວນໃນ ສປປ ລາວ ໃຫ້ສາມາດເຂົ້າເຖິງຂໍ້ມູນຄວາມຮູ້ວຽກງານຕະຫຼາດທຶນໄດ້ຢ່າງສະດວກຍິ່ງຂຶ້ນ ສຄຄຊ ຈະຫັນການໂຄສະນາເຜີຍແຜ່ ຜ່ານຊ່ອງທາງສື່ອອນລາຍໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນ ຜ່ານທາງ Facebook, Youtube, Tiktok ໃນຮູບແບບຕ່າງໆເຊັ່ນ: ພາບສະແດງຂໍ້ມູນ (Infographic) , ກາຕູນສັ້ນ (Animation), ການນຳສະເໜີໃນຮູບແບບວິດີໂອ (Podcast) ແລະ ອື່ນໆ. ນອກນີ້, ກໍ່ຈະສືບຕໍ່ສຶກສາ ແລະ ຄົ້ນຄວ້າ

ກ່ຽວກັບການສ້າງຕັ້ງສູນໃຫ້ຄວາມຮູ້ວຽກງານຕະຫຼາດທຶນ; ສືບຕໍ່ຈັດຕັ້ງປະຕິບັດໂຄງການຮ່ວມມືຊ່ວຍເຫຼືອສາມຝ່າຍ ລະຫວ່າງ ປະເທດລຸກຊຳບວກ, ສສ.ຫວຽດນາມ ແລະ ສປປ ລາວ (ໂຄງການ Lao/032) ໃນການພັດທະນາວຽກງານ ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ພ້ອມທັງ ສືບຕໍ່ຄຸ້ມຄອງຫ້ອງສະໝຸດ ສຄຄຊ ຢ່າງເປັນປົກກະຕິ ແລະ ສຶກສາຄວາມເປັນໄປໄດ້ໃນການຫັນເປັນຫ້ອງສະໝຸດອອນລາຍ.

### 3.7 ການຮ່ວມມືສາກົນ

ສຄຄຊ ຈະສືບຕໍ່ເພີ່ມທະວີການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ທັງພາກພື້ນ ແລະ ສາກົນ ໃຫ້ເຂົ້າສູ່ລວງກວ້າງ ແລະ ລວງເລິກ ເພື່ອພັດທະນາວຽກງານຕະຫຼາດທຶນ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ກ້າວສູ່ມາດຖານສາກົນເທື່ອລະກ້າວ ໂດຍຜ່ານການຈັດຕັ້ງປະຕິບັດການຮ່ວມມືສອງຝ່າຍ ເປັນຕົ້ນແມ່ນ: ຄຄຊ ສປ.ຈີນ, ຄຄຊ ສສ. ຫວຽດນາມ, ກລຕ ໄທ, ຄຄຊ ສ.ເກົາຫຼີ, ຍີ່ປຸ່ນ, CPA Australia, IOD ໄທ, ຕະຫຼາດຫຼັກຊັບໄທ, ລັດຖະບານລຸກຊຳບວກ ລວມທັງ ກະກຽມເປັນເຈົ້າພາບຈັດກອງປະຊຸມຮ່ວມມືສອງຝ່າຍຄັ້ງທີ 11 ປະຈຳປີ 2022 ຮ່ວມກັບ ຄຄຊ ສສ. ຫວຽດນາມ, ຄົ້ນຄວ້າສະເໜີຈັດຕັ້ງກອງປະຊຸມປະຈຳປີຮ່ວມກັບ ກລຕ ໄທ, ຄົ້ນຄວ້າກະກຽມສະເໜີເຊັນ MOU ຮ່ວມກັບ ຄຄຊ ກຳປູເຈຍ ແລະ ອື່ນໆ; ສືບຕໍ່ສ້າງສາຍພົວພັນຮ່ວມຫຼາຍຝ່າຍ ເປັນຕົ້ນແມ່ນ: ການຮ່ວມມືໃນການພັດທະນາຕະຫຼາດທຶນໃນຂອບ 5 ປະເທດເຂດແມ່ນ້ຳຂອງ ແລະ ການຮ່ວມມືໃນຂອບອາຊຽນ ແລະ ກະກຽມຄວາມພ້ອມໃນການເປັນຮອງປະທານ ACMF ໃນປີ 2023 ແລະ ປະທານ ACMF ໃນປີ 2024; ສືບຕໍ່ຮ່ວມມືກັບບັນດາອົງການຈັດຕັ້ງສາກົນຕ່າງໆ ເປັນຕົ້ນ: ທະນາຄານພັດທະນາອາຊີ (ADB), ອົງການການເງິນສາກົນ (IFC), ທະນາຄານໂລກ (WB) ເພື່ອພັດທະນາວຽກງານການບັນຊີ ແລະ ຕະຫຼາດຮຸ້ນກູ້ຂອງ ສປປ ລາວ ພ້ອມທັງ ໃຫ້ສຳເລັດການກະກຽມເພື່ອເຂົ້າຮ່ວມການປະເມີນຄວາມສອດຄ່ອງດ້ານນິຕິກຳ ເບື້ອງຕົ້ນ ຮ່ວມກັບຄະນະທົບທວນ (Screening Group ຂອງ IOSCO) ພ້ອມທັງ ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ ທີ່ຕິດພັນ.

# ຂໍ້ມູນຕິດຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)



ທີ່ຕັ້ງສຳນັກງານ: ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

PO. Box: 19

Phone: (856-21) 217 770

Fax: (856-21) 217 806

E-mail: lsco@lsc.gov.la

Website: www.lsc.gov.la

ໂທລະສັບສາຍດ່ວນ: 1602

Facebook: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

Youtube: ລາຍການ “ເສັ້ນທາງສູ່ຕະຫຼາດທຶນລາວ”.